ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ

ເລກທີ 163 /ລບ
ນະຄອນຫຼວງວຽງຈັນ, ວັນທີ 27/02/25

# ດຳລັດ
# ວ່າດ້ວຍທີ່ດິນກະສິກຳ

- ອີງຕາມ ກົດໝາຍວ່າດ້ວຍລັດຖະບານ ເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍວ່າດ້ວຍທີ່ດິນ ເລກທີ 70/ສພຊ, ລົງວັນທີ 21 ມິຖຸນາ 2019;
- ອີງຕາມ ໜັງສືສະເໜີ ຂອງກະຊວງກະສິກຳ ແລະ ປ່າໄມ້ ສະບັບເລກທີ 0967/ກປ, ລົງວັນທີ 29 ກຸມພາ 2024.

## ລັດຖະບານ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ດຳລັດສະບັບນີ້ ກຳນົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຄຸ້ມຄອງ ແລະ ຕິດຕາມກວດກາ ວຽກງານທີ່ດິນກະສິກຳ ເພື່ອເຮັດໃຫ້ວຽກງານດັ່ງກ່າວ ມີປະສິດທິພາບ ແລະ ປະສິດທິຜົນ ແນໃສ່ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ທີ່ດິນກະສິກຳ ໃຫ້ຖືກຕ້ອງຕາມເປົ້າໝາຍ, ຮັບປະກັນການຜະລິດສະບຽງອາຫານ ແລະ ຜະລິດເປັນສິນຄ້າ, ປັບປຸງຊີວິດການເປັນຢູ່ ຂອງປະຊາຊົນລາວບັນດາເຜົ່າ ປະກອບສ່ວນການພັດທະນາເສດຖະກິດ-ສັງຄົມ ຂອງຊາດ ຕາມທິດກະສິກຳສະອາດ ສີຂຽວ ແລະ ຍືນຍົງ.

### ມາດຕາ 2 ທີ່ດິນກະສິກຳ

ທີ່ດິນກະສິກຳ ແມ່ນ ທີ່ດິນກຳນົດໄວ້ ເພື່ອການນຳໃຊ້ເຂົ້າໃນການ ປູກຝັງ, ລ້ຽງສັດ, ປະມົງ, ຊົນລະປະທານ ແລະ ການຄົ້ນຄວ້າທົດລອງ ດ້ານກະສິກຳ.

### ມາດຕາ 3 ການອະທິບາຍຄຳສັບ

ຄຳສັບທີ່ນຳໃຊ້ ໃນດຳລັດສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ດິນທີ່ມີຄວາມອຸດົມສົມບູນ** ໝາຍເຖິງ ດິນທີ່ມີຄຸນສົມບັດທາງດ້ານເຄມີ, ຟີຊິກ ແລະ ຊີວະວິທະຍາ ທີ່ພຽງພໍ ສຳລັບການຈະເລີນເຕີບໂຕຂອງພືດ;
2. **ການເຊື່ອມໂຊມ ຂອງດິນ** ໝາຍເຖິງ ການຫຼຸດລົງ ຂອງຄຸນສົມບັດ ທາງດ້ານເຄມີ, ຟີຊິກ ແລະ ຊີວະວິທະຍາ ເນື່ອງຈາກການກະທຳຂອງມະນຸດ ຫຼື ເກີດຈາກການປ່ຽນແປງທາງທຳມະຊາດ;

3. **ຝຸ່ນ (Fertilizer)** ໝາຍເຖິງ ວັດຖຸ ທີ່ມີສ່ວນປະກອບ ທາງເຄມີ ທີ່ຈຳເປັນສຳລັບ ການຈະເລີນເຕີບໂຕ ແລະ ເພີ່ມຜົນຜະລິດຂອງພືດ ຊຶ່ງລວມມີ ສອງ ກຸ່ມຝຸ່ນຫຼັກ ຄື ຝຸ່ນອະນົງຄະທາດ ຫຼື ຝຸ່ນເຄມີ ແລະ ຝຸ່ນອົງຄະທາດ;

4. **ຝຸ່ນອະນົງຄະທາດ ຫຼື ຝຸ່ນເຄມີ (Inorganic fertilizer)** ໝາຍເຖິງ ຝຸ່ນທີ່ໄດ້ຈາກຂະບວນການສັງເຄາະທາງເຄມີ ທີ່ມີການກຳນົດທາດອາຫານຫຼັກຂອງພືດ ເປັນຕົ້ນ ທາດໄນໂຕຣເຈນ (N), ຟົດສະຟໍຣັສ (P), ໂພແຕຊຽມ (K);

5. **ຝຸ່ນອົງຄະທາດ (Organic fertilizer)** ໝາຍເຖິງ ຝຸ່ນທີ່ໄດ້ຈາກສິ່ງເສດເຫຼືອຂອງພືດ, ສັດ, ດິນອິນຊີ (Peat ຫຼື Organic soil) ເປັນຕົ້ນ ສິ່ງເສດເຫຼືອຈາກກະສິກຳ, ມູນສັດລ້ຽງ, ມູນເຈຍ ທີ່ໄດ້ນຳມາຜ່ານຂະບວນການບົ່ມ, ໝັກ ຫຼື ວິທີການອື່ນ ຕາມຫຼັກວິຊາການ ລວມທັງຝຸ່ນຊີວະພາບ;

6. **ຝຸ່ນຊີວະພາບ (Biofertilizer)** ໝາຍເຖິງ ຝຸ່ນອົງຄະທາດປະເພດໜຶ່ງ ທີ່ມີການປະສົມຫົວເຊື້ອຈຸລິນຊີ ຫຼື ແບັກທີເຣຍ ຊະນິດໃດໜຶ່ງ ຫຼື ຫຼາຍຊະນິດ ຕາມຄວາມຕ້ອງການຂອງຜູ້ນຳໃຊ້ ຊຶ່ງມີເປົ້າໝາຍ ສົ່ງເສີມ ຫຼື ກະຕຸ້ນ ການເປັນປະໂຫຍດຂອງຝຸ່ນ ຕໍ່ພືດຫຼາຍຂຶ້ນ ແລະ ປ້ອງກັນການຕິດເຊື້ອຂອງຮາກພືດ;

7. **ທາດສະພາບ** ໝາຍເຖິງ ສະພາວະຄວາມເປັນຈິງທີ່ຕ້ອງຍອມຮັບ ຊຶ່ງເກີດຂຶ້ນຈາກທຳມະຊາດ ແລະ ຖືກກຳນົດໃນກົດໝາຍ, ສັນຍາ ຫຼື ນິຕິກຳອື່ນ.

### ມາດຕາ 4 ຫຼັກການ ກ່ຽວກັບວຽກງານທີ່ດິນກະສິກຳ

ວຽກງານທີ່ດິນກະສິກຳ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ແນວທາງ ນະໂຍບາຍ, ກົດໝາຍ, ແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ, ແຜນຍຸດທະສາດການຄຸ້ມຄອງທີ່ດິນກະສິກຳ, ແຜນພັດທະນາເສດຖະກິດ ແລະ ສັງຄົມແຫ່ງຊາດ;
2. ຄຸ້ມຄອງຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ;
3. ຮັບປະກັນການຮັກສາເນື້ອທີ່ ທີ່ດິນກະສິກຳ ບໍ່ໃຫ້ສູນເສຍ;
4. ຮັບປະກັນການນຳໃຊ້ ທີ່ດິນກະສິກຳ ໃຫ້ເກີດຜົນປະໂຫຍດສູງສຸດ ແລະ ສ້າງຜົນກະທົບທາງລົບຕໍ່ຄຸນນະພາບດິນ, ນ້ຳ, ສິ່ງແວດລ້ອມ, ເສດຖະກິດ ແລະ ສັງຄົມ ໜ້ອຍທີ່ສຸດ;
5. ຮັບປະກັນການປະສານສົມທົບ ລະຫວ່າງ ຂະແໜງການ, ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ, ການມີສ່ວນຮ່ວມຂອງຊຸມຊົນ ແລະ ປະຊາຊົນ;
6. ສອດຄ່ອງກັບ ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນ ທີ່ກ່ຽວຂ້ອງ.

### ມາດຕາ 5 ຂອບເຂດການນຳໃຊ້

ດຳລັດສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທັງພາຍໃນ ແລະ ຕ່າງປະເທດ ທີ່ເຄື່ອນໄຫວ ແລະ ພົວພັນ ກ່ຽວກັບວຽກງານທີ່ດິນກະສິກຳ ຢູ່ ສປປ ລາວ.

## ໝວດທີ 2
## ການສຳຫຼວດ ທີ່ດິນກະສິກຳ

### ມາດຕາ 6 ການສຳຫຼວດ ທີ່ດິນກະສິກຳ

ການສຳຫຼວດ ທີ່ດິນກະສິກຳ ແມ່ນ ການເກັບກຳຂໍ້ມູນ, ເກັບຕົວຢ່າງດິນ, ວິໄຈດິນ, ປະເມີນຄຸນນະພາບຂອງດິນ ແລະ ຄວາມເໝາະສົມຂອງທີ່ດິນ ຕໍ່ການຜະລິດກະສິກຳ.

ຂະແໜງການກະສິກຳ ແລະ ປ່າໄມ້ ເປັນເຈົ້າການ ປະສານສົມທົບກັບ ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ດຳເນີນການສຳຫຼວດທີ່ດິນກະສິກຳ ໂດຍການມີສ່ວນຮ່ວມຂອງປະຊາຊົນ ໃນເຂດທ້ອງຖິ່ນທີ່ກ່ຽວຂ້ອງ.

**ມາດຕາ 7 ການເກັບກຳຂໍ້ມູນ ທີ່ດິນກະສິກຳ**

ການເກັບກຳຂໍ້ມູນ ທີ່ດິນກະສິກຳ ແມ່ນ ການເກັບກຳ ຂໍ້ມູນ ກ່ຽວກັບຂອບເຂດ, ເນື້ອທີ່ດິນ, ສະພາບການນຳໃຊ້ທີ່ດິນ, ລັກສະນະທາງພູມສັນຖານ, ຄຸນລັກສະນະທາງກາຍຍະພາບ ຂອງທີ່ດິນ ແລະ ການປ່ຽນແປງການນຳໃຊ້ທີ່ດິນ ລວມທັງທ່າແຮງ ແລະ ຂໍ້ຈຳກັດຕ່າງໆ ຂອງທີ່ດິນກະສິກຳ.

**ມາດຕາ 8 ການເກັບຕົວຢ່າງ ແລະ ວິໄຈດິນ**

ການເກັບຕົວຢ່າງ ແລະ ວິໄຈດິນ ແມ່ນ ການເກັບຕົວຢ່າງດິນ ໃນພື້ນທີ່ດິນກະສິກຳມາວິໄຈ ເພື່ອຊອກຫາຄຸນສົມບັດທາງດ້ານ ເຄມີ, ຟີຊິກ ແລະ ຊີວະວິທະຍາ ຂອງດິນ ເພື່ອເປັນຂໍ້ມູນພື້ນຖານ ໃຫ້ແກ່ການວາງແຜນ ແລະ ການນຳໃຊ້ທີ່ດິນ ໃຫ້ມີປະສິດທິຜົນ.

**ມາດຕາ 9 ການປະເມີນຄຸນນະພາບດິນກະສິກຳ**

ການປະເມີນຄຸນນະພາບດິນກະສິກຳ ແມ່ນ ການປະເມີນທ່າແຮງ ແລະ ຂໍ້ຈຳກັດຂອງດິນທາງດ້ານ ເຄມີ, ຟີຊິກ, ຊີວະວິທະຍາ ແລະ ລັກສະນະທີ່ຕັ້ງພູມສັນຖານຂອງດິນ ເພື່ອເປົ້າໝາຍຂອງການນຳໃຊ້.

**ມາດຕາ 10 ການປະເມີນຄວາມເໝາະສົມຂອງທີ່ດິນ**

ການປະເມີນຄວາມເໝາະສົມຂອງທີ່ດິນ ແມ່ນ ຂະບວນການປະເມີນຄວາມເໝາະສົມຂອງທີ່ດິນ ຕໍ່ກັບການປູກພືດ ໂດຍອີງຕາມຂໍ້ມູນທາງດ້ານ ເຄມີ, ຟີຊິກ, ຊີວະວິທະຍາ ແລະ ລັກສະນະທີ່ຕັ້ງພູມສັນຖານຂອງດິນ ລວມທັງສະພາບພູມອາກາດ ໂດຍການປຽບທຽບ ລະຫວ່າງ ມາດຖານຄວາມຕ້ອງການ ໃນການຈະເລີນເຕີບໂຕ ຂອງພືດ ເພື່ອເປັນບ່ອນອີງໃຫ້ແກ່ການວາງແຜນການນຳໃຊ້ທີ່ດິນ.

## ໝວດທີ 3
## ເປົ້າໝາຍການນຳໃຊ້ ແລະ ສ້າງແຜນທີ່ ທີ່ດິນກະສິກຳ

**ມາດຕາ 11 ເປົ້າໝາຍການນຳໃຊ້ທີ່ດິນກະສິກຳ**

ເປົ້າໝາຍການນຳໃຊ້ທີ່ດິນກະສິກຳ ມີ ດັ່ງນີ້:

1. ທີ່ດິນນາ;
2. ທີ່ດິນປູກພືດລົ້ມລຸກ ຫຼື ພືດອາຍຸສັ້ນ;
3. ທີ່ດິນປູກຕົ້ນໄມ້ໃຫ້ໝາກ ຫຼື ພືດອາຍຸຍາວ;
4. ທີ່ດິນລ້ຽງສັດ ແລະ ປະມົງ;
5. ທີ່ດິນຊົນລະປະທານ;
6. ທີ່ດິນຄົ້ນຄວ້າທົດລອງ ດ້ານກະສິກຳ.

ຂະແໜງການກະສິກຳ ແລະ ປ່າໄມ້ ເປັນເຈົ້າການ ປະສານສົມທົບກັບ ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ຄົ້ນຄວ້າກຳນົດເປົ້າໝາຍການນຳໃຊ້ທີ່ດິນກະສິກຳ.

**ມາດຕາ 12 ທີ່ດິນນາ**

ທີ່ດິນນາ ແມ່ນ ທີ່ດິນ ທີ່ມີຄັນນາ ໃນການປ້ອງກັນຮັກສານ້ຳ ແລະ ຝຸ່ນ, ນຳໃຊ້ປູກເຂົ້າເປັນຫຼັກ ແລະ ສາມາດປູກພືດລົ້ມລຸກ ຫຼື ພືດອາຍຸສັ້ນ ເປັນຕົ້ນ ພືດຕະກຸນຖົ່ວ, ສາລີ, ໝາກໂມ, ພືດຜັກ.

### ມາດຕາ 13 ທີ່ດິນປູກພືດລົ້ມລຸກ ຫຼື ພືດອາຍຸສັ້ນ

ທີ່ດິນປູກພືດລົ້ມລຸກ ຫຼື ພືດອາຍຸສັ້ນ ແມ່ນ ທີ່ດິນ ທີ່ມີລັກສະນະລຸບໂນນເລັກໜ້ອຍ, ມີຄວາມຄ້ອຍຊັນ ບໍ່ເກີນ ສິບຫ້າ ອົງສາ, ເປັນດິນທີ່ລະບາຍນ້ຳດີ, ມີລະບົບນິເວດວິທະຍາທີ່ມີຄວາມເໝາະສົມ ໃນການປູກພືດທີ່ມີອາຍຸຕ່ຳກວ່າ ໜຶ່ງປີ ລົງມາ ເປັນຕົ້ນ ສາລີ, ມັນຕົ້ນ, ມັນດ້າງ, ຕະກຸນຖົ່ວ, ຢາສູບ, ໝາກເດືອຍ, ອ້ອຍ, ຝ້າຍ, ໝາກງາ, ພືດຜັກ.

### ມາດຕາ 14 ທີ່ດິນປູກຕົ້ນໄມ້ໃຫ້ໝາກ ຫຼື ພືດອາຍຸຍາວ

ທີ່ດິນປູກຕົ້ນໄມ້ໃຫ້ໝາກ ຫຼື ພືດອາຍຸຍາວ ແມ່ນ ທີ່ດິນ ທີ່ມີຄວາມຄ້ອຍຊັນ ບໍ່ເກີນ ສາມສິບຫ້າ ອົງສາ, ເປັນຊັ້ນດິນເລິກ, ເປັນດິນທີ່ລະບາຍນ້ຳດີ, ມີລະບົບນິເວດວິທະຍາທີ່ເໝາະສົມ ໃນການປູກພືດທີ່ມີອາຍຸຍາວຫຼາຍກວ່າ ໜຶ່ງປີ ຂຶ້ນໄປ ເປັນຕົ້ນ ຊາ, ຢາງພາລາ, ໝາກມ່ວງ, ໝາກລຳໄຍ, ໝາກມີ້, ໝາກຂາມ, ໝາກກ້ຽງ, ໝາກນາວ, ໝາກລິ້ນຈີ່, ໝາກຖົ່ວລຽນ, ໝາກມັງກອນ, ກາເຟ.

### ມາດຕາ 15 ທີ່ດິນລ້ຽງສັດ ແລະ ສັດນ້ຳ

ທີ່ດິນລ້ຽງສັດ ແມ່ນ ທີ່ດິນ ທີ່ມີຄວາມຄ້ອຍຊັນ ຊາວຫ້າ ອົງສາ ລົງມາ, ເປັນທົ່ງຫຍ້າຕາມທຳມະຊາດ ຊຶ່ງເປັນຊັ້ນດິນຕື້ນ, ດິນມີຫີນເຈືອປົນ ຕາມໜ້າດິນ ລວມທັງທີ່ດິນທີ່ມີນ້ຳຖ້ວມຂັງໃນລະດູຝົນ ແລະ ທີ່ດິນປອກໂລ້ນທີ່ມີຄວາມເໝາະສົມ ນຳໃຊ້ໃນການລ້ຽງ ແລະ ຂະຫຍາຍແນວພັນສັດ ເປັນຕົ້ນ ງົວ, ຄວາຍ, ໝູ, ແບ້.

ທີ່ດິນລ້ຽງສັດນ້ຳ ແມ່ນ ທີ່ດິນບໍລິເວນນ້ຳ ທີ່ມີນ້ຳຖ້ວມຂັງ ເປັນຕົ້ນ ອ່າງເກັບນ້ຳ, ບຶງ, ໜອງຕາມທຳມະຊາດ, ໜອງຂຸດ ທີ່ເໝາະສົມໃນການລ້ຽງສັດນ້ຳ ເປັນຕົ້ນ ປາ, ກຸ້ງ.

### ມາດຕາ 16 ທີ່ດິນຊົນລະປະທານ

ທີ່ດິນຊົນລະປະທານ ແມ່ນ ທີ່ດິນ ທີ່ນຳໃຊ້ສຳລັບ ການຊົນລະປະທານ ຊຶ່ງປະກອບມີ ທີ່ດິນຫົວງານ, ອ່າງເກັບນ້ຳ, ລະບົບຄອງຫົດ, ລະບົບຄອງລະບາຍ ທີ່ສາມາດສະໜອງນ້ຳ ແລະ ຂະຫຍາຍ ຕາມການສຶກສາ, ສຳຫຼວດອອກແບບ ໂດຍມີຫຼັກເຂດກັນຊົນກຳນົດໄວ້.

### ມາດຕາ 17 ທີ່ດິນຄົ້ນຄວ້າທົດລອງດ້ານກະສິກຳ

ທີ່ດິນຄົ້ນຄວ້າທົດລອງດ້ານກະສິກຳ ແມ່ນ ທີ່ດິນ ທີ່ມີຄວາມເໝາະສົມ ເພື່ອນຳໃຊ້ເຂົ້າໃນການຄົ້ນຄວ້າທົດລອງ ດ້ານເຕັກນິກວິທະຍາສາດ, ຮັກສາແຫຼ່ງພັນທຸກຳ ພືດ, ສັດ, ສັດນ້ຳ, ປຸກສ້າງສູນຄົ້ນຄວ້າທົດລອງ ແລະ ອື່ນໆ.

### ມາດຕາ 18 ການສ້າງແຜນທີ່ທີ່ດິນກະສິກຳ

ການສ້າງແຜນທີ່ທີ່ດິນກະສິກຳ ແມ່ນ ຂະບວນການທາງດ້ານເຕັກນິກ ທີ່ນຳໃຊ້ຂໍ້ມູນຈາກການສຳຫຼວດ, ການກຳນົດເປົ້າໝາຍການນຳໃຊ້ ແລ້ວອອກແບບ, ຕົກແຕ່ງແຕ້ມ ແລະ ການພິມແຜນທີ່.

ມາດຕາສ່ວນ ຂອງແຜນທີ່ດິນກະສິກຳ ໃຫ້ປະຕິບັດ ດັ່ງນີ້:

1. ລະດັບຊາດ: 1:1.000.000 ຫາ 1:500.000;
2. ລະດັບແຂວງ: 1:250.000 ຫາ 1:100.000;
3. ລະດັບເມືອງ: 1:50.000 ຫາ 1:25.000;
4. ລະດັບບ້ານ: 1:10.000 ຫາ 1:5.000;
5. ນ້ອຍກວ່າລະດັບບ້ານ ຕ່ຳກວ່າ 1:5.000.

## ໝວດທີ 4
## ແຜນການນຳໃຊ້ທີ່ດິນກະສິກຳ

### ມາດຕາ 19 ການວາງແຜນການນຳໃຊ້ທີ່ດິນກະສິກຳ

ການວາງແຜນນຳໃຊ້ທີ່ດິນກະສິກຳ ແມ່ນ ການສຳຫຼວດ ເກັບກຳຂໍ້ມູນ ການນຳໃຊ້ທີ່ດິນ, ຂໍ້ມູນການວິໄຈດິນ, ສິດຄອບຄອງທີ່ດິນ ເພື່ອປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ ທີ່ດິນກະສິກຳ ໂດຍສອດຄ່ອງກັບແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ ແລະ ມີຄວາມເໝາະສົມກັບສະພາບຕົວຈິງຂອງແຕ່ລະທ້ອງຖິ່ນ.

ແຜນການນຳໃຊ້ທີ່ດິນກະສິກຳ ມີ ສາມ ລະດັບ ຄື ຂັ້ນ ບ້ານ, ເມືອງ ແລະ ແຂວງ.

### ມາດຕາ 20 ແຜນການນຳໃຊ້ທີ່ດິນກະສິກຳ ຂັ້ນບ້ານ

ຫ້ອງການກະສິກຳ ແລະ ປ່າໄມ້ ເປັນເຈົ້າການ ປະສານກັບ ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ຫ້ອງການອື່ນ ແລະ ອົງການປົກຄອງບ້ານ ໂດຍມີການເຂົ້າຮ່ວມຂອງປະຊາຊົນໃນບ້ານ ດຳເນີນການວາງແຜນນຳໃຊ້ທີ່ດິນກະສິກຳ ຂັ້ນບ້ານ ແລ້ວສະເໜີຕໍ່ ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ພິຈາລະນາ ຮັບຮອງ.

### ມາດຕາ 21 ແຜນການນຳໃຊ້ທີ່ດິນກະສິກຳ ຂັ້ນເມືອງ

ພະແນກກະສິກຳ ແລະ ປ່າໄມ້ ເປັນເຈົ້າການ ປະສານກັບ ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ພະແນກການອື່ນ ແລະ ອົງການປົກຄອງຂັ້ນເມືອງ ດຳເນີນການວາງແຜນນຳໃຊ້ທີ່ດິນກະສິກຳ ຂັ້ນເມືອງ ບົນພື້ນຖານແຜນການນຳໃຊ້ທີ່ດິນຂັ້ນບ້ານ ແລ້ວສະເໜີຕໍ່ ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ ພິຈາລະນາຮັບຮອງ.

### ມາດຕາ 22 ແຜນການນຳໃຊ້ທີ່ດິນກະສິກຳ ຂັ້ນແຂວງ

ພະແນກກະສິກຳ ແລະ ປ່າໄມ້ ເປັນເຈົ້າການສົມທົບກັບ ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ພະແນກການອື່ນ ແລະ ອົງການປົກຄອງຂັ້ນເມືອງ ດຳເນີນການວາງແຜນນຳໃຊ້ທີ່ດິນກະສິກຳ ຂັ້ນແຂວງ ບົນພື້ນຖານ ແຜນການນຳໃຊ້ທີ່ດິນຂັ້ນເມືອງ ແລ້ວສະເໜີຕໍ່ ອົງການປົກຄອງຂັ້ນແຂວງ ເພື່ອນຳສະເໜີຕໍ່ ສະພາປະຊາຊົນຂັ້ນແຂວງ ພິຈາລະນາຮັບຮອງ.

### ມາດຕາ 23 ການປັກຫຼັກໝາຍທີ່ດິນກະສິກຳ

ການປັກຫຼັກໝາຍ ທີ່ດິນກະສິກຳ ແມ່ນ ການກຳນົດເຂດເພື່ອສະຫງວນ ທີ່ດິນກະສິກຳ ທີ່ເປັນບູລິມະສິດເປັນຕົ້ນ ພື້ນທີ່ດິນກະສິກຳ ເຂດຮັບນ້ຳຊົນລະປະທານ, ດິນທີ່ມີຄວາມອຸດົມສົມບູນ, ດິນທີ່ມີຊັ້ນດິນປູກຝັງເລິກ, ດິນທີ່ມີເອກະລັກສະເພາະ ແລະ ດິນສຳລັບການຄົ້ນຄວ້າທົດລອງດ້ານກະສິກຳ ໂດຍອີງຕາມຜົນການວາງແຜນການນຳໃຊ້ທີ່ດິນກະສິກຳ.

ຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ, ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຂັ້ນເມືອງ ຮ່ວມກັບພາກສ່ວນທີ່ກ່ຽວຂ້ອງ ດຳເນີນການປັກຫຼັກໝາຍເຂດທີ່ດິນກະສິກຳ.

### ມາດຕາ 24 ການແຈ້ງບັນຊີ ແລະ ຂຶ້ນທະບຽນທີ່ດິນກະສິກຳ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີທີ່ດິນກະສິກຳ ຢູ່ໃນການຄອບຄອງຂອງຕົນ ຕ້ອງແຈ້ງບັນຊີ ແລະ ຂຶ້ນທະບຽນ ນຳຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ ເພື່ອອອກໃບຢັ້ງຢືນເປົ້າໝາຍການນຳໃຊ້ທີ່ດິນກະສິກຳ.

## ໝວດທີ 5
## ການປົກປັກຮັກສາ ທີ່ດິນກະສິກຳ

**ມາດຕາ 25 ການປົກປັກຮັກສາ ທີ່ດິນກະສິກຳ**

ການປົກປັກຮັກສາທີ່ດິນກະສິກຳ ຕ້ອງໄດ້ຮັບການປົກປັກຮັກສາ ໂດຍການກຳນົດຂອບເຂດພື້ນທີ່ດິນ ແລະ ສະຫງວນໄວ້ ເພື່ອນຳໃຊ້ເຂົ້າໃນວຽກງານກະສິກຳ ໃຫ້ມີປະສິດທິຜົນ ແລະ ນຳໃຊ້ຖືກຕ້ອງຕາມເປົ້າໝາຍ ດ້ວຍການວາງລະບຽບການ ແລະ ມາດຕະການປົກປັກຮັກສາທີ່ດິນດັ່ງກ່າວ ໂດຍສອດຄ່ອງກັບແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ, ແຜນຍຸດທະສາດ ແລະ ແຜນການນຳໃຊ້ທີ່ດິນກະສິກຳຂອງຂະແໜງການກະສິກຳ ແລະ ປ່າໄມ້ ແລະ ແຜນຈັດສັນທີ່ດິນຂອງອົງການປົກຄອງທ້ອງຖິ່ນ ໃນແຕ່ລະໄລຍະ.

ການປົກປັກຮັກສາທີ່ດິນກະສິກຳ ປະກອບດ້ວຍ:

1. ເຂດມີໂຄງລ່າງຊົນລະປະທານ ຮັບປະກັນ ແລະ ສາມາດຮັບນ້ຳຊົນລະປະທານ ເຮັດການຜະລິດໄດ້ທັງສອງລະດູ;
2. ເຂດທີ່ດິນມີຄຸນລັກສະນະສະເພາະ ແລະ ເໝາະສົມສຳລັບການປູກພືດ ຫຼື ຕົ້ນໄມ້ຊະນິດໃດໜຶ່ງ ເປັນຕົ້ນ ເຂດທີ່ເໝາະສົມ ໃນການປູກ ເຂົ້າໄກ່ນ້ອຍ, ໂສມ, ກາເຟ, ຊາ ແລະ ພືດທີ່ເປັນຢາ ທີ່ບໍ່ສາມາດປູກໄດ້ໃນເຂດອື່ນໆ;
3. ເຂດການລ້ຽງສັດ ແລະ ການປະມົງ ທີ່ມີລັກສະນະສະເພາະ;
4. ເຂດທີ່ດິນ ສຳລັບການຄົ້ນຄວ້າທົດລອງກະສິກຳ.

**ມາດຕາ 26 ການຮັກສາຄຸນນະພາບ ຂອງດິນກະສິກຳ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຕ້ອງເປັນເຈົ້າການ ໃນການບູລະນະ, ປັບປຸງບຳລຸງດິນ ໃຫ້ມີຄວາມອຸດົມສົມບູນດີ, ບໍ່ໃຫ້ມີການເຊາະເຈື່ອນສູນເສຍ, ເຊື່ອມໂຊມ, ບໍ່ໃຫ້ມີສານເຄມີເປັນພິດທີ່ຕົກຄ້າງ ແລະ ບໍ່ໃຫ້ມີຜົນກະທົບອັນບໍ່ດີ ຕໍ່ສິ່ງແວດລ້ອມ ແລະ ສັງຄົມ.

**ມາດຕາ 27 ການປ້ອງກັນການເຊາະເຈື່ອນ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ຕ້ອງເປັນເຈົ້າການ ໃນການປົກປັກຮັກສາທີ່ດິນກະສິກຳ ບໍ່ໃຫ້ຖືກເຊາະເຈື່ອນ ໂດຍການນຳໃຊ້ເຕັກນິກ, ວິທີການທີ່ເໝາະສົມ ເປັນຕົ້ນ ການກຽມດິນທີ່ຖືກວິທີ, ການປູກພືດຄຸມດິນ, ປູກພືດສະຫຼັບ, ປູກພືດຕາມແລວລະດັບ, ສ້າງແລວຄັນດິນ ແລະ ຄັນພືດ, ຫຼີກລ້ຽງການນຳໃຊ້ກົນຈັກໜັກຕໍ່ການກຽມດິນໃນພື້ນທີ່ຄ້ອຍຊັນ.

**ມາດຕາ 28 ການສະຫງວນທີ່ດິນກະສິກຳ**

ເຂດສະຫງວນທີ່ດິນກະສິກຳ ແມ່ນ ເຂດທີ່ກຳນົດໃຫ້ເປັນພື້ນທີ່ຫວງຫ້າມ ແລະ ບໍ່ອະນຸຍາດໃຫ້ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ເຂົ້າໄປນຳໃຊ້, ຍົກເວັ້ນ ການສຶກສາຄົ້ນຄວ້າທາງດ້ານວິທະຍາສາດ, ກິດຈະການຄຸ້ມຄອງທີ່ດິນກະສິກຳ, ການນຳໃຊ້ເພື່ອສັກກະລະບູຊາ ແລະ ການທ່ອງທ່ຽວແບບອະນຸລັກ.

ເຂດສະຫງວນທີ່ດິກະສິກຳ ແຕ່ລະເປົ້າໝາຍ ປະກອບດ້ວຍ:

1. ການກຳນົດເຂດສະຫງວນຢູ່ໜ້າດິນ;
2. ການກຳນົດເຂດສະຫງວນໃຕ້ດິນ;
3. ການກຳນົດເຂດສະຫງວນຢູ່ໜ້ານ້ຳ;
4. ການກຳນົດເຂດສະຫງວນຢູ່ດິນພື້ນນ້ຳ;
5. ການປົກປັກຮັກສາຊີວະນານາພັນ;
6. ການຄຸ້ມຄອງ ແລະ ຫຼຸດຜ່ອນຜົນກະທົບຂອງໂຄງການລົງທຶນ.

**ມາດຕາ 29 ການກຳນົດເຂດສະຫງວນຢູ່ໜ້າດິນ**

ການກຳນົດເຂດສະຫງວນຢູ່ໜ້າດິນ ແມ່ນ ການກຳນົດພື້ນທີ່ສະຫງວນໄວ້ ນັບຈາກແຄມຕາຝັ່ງເຂົ້າໄປໃນເຂດທີ່ດິນເບື້ອງໃນ ຢ່າງໜ້ອຍ ສາມສິບຫ້າແມັດ ສຳລັບແມ່ນ້ຳຂອງ, ຊາວຫ້າແມັດ ສຳລັບແມ່ນ້ຳອື່ນ ແລະ ສິບຫ້າແມັດ ສຳລັບຫ້ວຍ, ໜອງ, ຄອງ, ຮ່ອງ, ບຶງ, ອ່າງເກັບນ້ຳ.

ການກຳນົດພື້ນທີ່ດັ່ງກ່າວ ໃຫ້ອີງຕາມຄວາມຈຳເປັນ ຂອງມາດຕະຖານເຕັກນິກ ເພື່ອປ້ອງກັນຄວາມປອດໄພ ແລະ ປົກປັກຮັກສາສິ່ງແວດລ້ອມ, ທຳມະຊາດ ແລະ ສັງຄົມ. ໃນກໍລະນີ ທີ່ມີພື້ນທີ່ຈຳກັດໃນເຂດຊຸມຊົນໜາແໜ້ນ, ແຫຼ່ງວັດຖຸບູຮານ, ສະຖານທີ່ສຳຄັນທາງດ້ານປະຫວັດສາດ ແລະ ເຂດອະນຸລັກນັ້ນ ພື້ນທີ່ເຂດສະຫງວນທີ່ດິນກະສິກຳ ໃຫ້ປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 30 ການກຳນົດເຂດສະຫງວນໃຕ້ດິນ**

ການກຳນົດເຂດສະຫງວນໃຕ້ດິນ ແມ່ນ ການກຳນົດພື້ນທີ່ສະຫງວນຈາກໜ້າດິນເລິກລົງໄປຕາມເຂດສະຫງວນໜ້າດິນ ເພື່ອປ້ອງກັນຕາຝັ່ງເຊາະ, ເຈື່ອນ, ຍຸບ ຫຼື ກໍ່ສ້າງໂຄງລ່າງພື້ນຖານທາງນ້ຳ. ຖ້າມີຄວາມຈຳເປັນກໍ່ສ້າງກິດຈະການໃດໜຶ່ງ ເປັນຕົ້ນ ການວາງທໍ່ນ້ຳປະປາ, ທໍ່ລະບາຍນ້ຳ, ທໍ່ສົ່ງສາຍໄຟຟ້າ, ທໍ່ສົ່ງອາຍແກັສ ແລະ ອື່ນໆ ຢູ່ໃຕ້ດິນ ຕ້ອງໄດ້ຮັບອະນຸຍາດຈາກຂະແໜງການທີ່ກ່ຽວຂ້ອງ.

**ມາດຕາ 31 ການກຳນົດເຂດສະຫງວນຢູ່ໜ້ານ້ຳ**

ການກຳນົດເຂດສະຫງວນຢູ່ໜ້ານ້ຳ ແມ່ນ ການກຳນົດພື້ນທີ່ນັບຈາກແຄມຕາຝັ່ງອອກໄປທາງແມ່ນ້ຳຢ່າງໜ້ອຍ ໜຶ່ງຮ້ອຍ ແມັດ ສຳລັບແມ່ນ້ຳຂອງ ແລະ ສອງສ່ວນຫ້າ ຂອງຄວາມກວ້າງຂອງແມ່ນ້ຳ ສຳລັບແມ່ນ້ຳອື່ນ, ຫ້ວຍ, ໜອງ, ຄອງ, ຮ່ອງ, ບຶງ ແລະ ອື່ນໆ.

**ມາດຕາ 32 ການກຳນົດເຂດສະຫງວນຢູ່ດິນພື້ນນ້ຳ**

ການກຳນົດເຂດສະຫງວນຢູ່ດິນພື້ນນ້ຳ ແມ່ນ ການກຳນົດພື້ນທີ່ສະຫງວນນັບຈາກ ພື້ນດິນທີ່ຢູ່ໃຕ້ນ້ຳລົງໄປ ຢ່າງໜ້ອຍ ສອງແມັດ ເພື່ອປ້ອງກັນບໍ່ໃຫ້ມີຜົນກະທົບ.

ຖ້າມີຄວາມຈຳເປັນກໍ່ສ້າງກິດຈະການໃດໜຶ່ງ ເປັນຕົ້ນ ການວາງທໍ່, ສາຍກາບໄຟຟ້າ, ສາຍໂທລະຄົມມະນາຄົມ, ການສື່ສານ ລອດດິນພື້ນນ້ຳ ຕ້ອງຂໍອະນຸຍາດຈາກ ຂະແໜງການຄຸ້ມຄອງທີ່ດິນບໍລິເວນນ້ຳ ແລະ ຂະແໜງການໂຍທາທິການ ແລະ ຂົນສົ່ງ.

**ມາດຕາ 33 ການປົກປັກຮັກສາຊີວະນານາພັນ**

ຂະແໜງການຄຸ້ມຄອງທີ່ດິນກະສິກຳ ເປັນເຈົ້າການປະສານສົມທົບກັບຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ໂດຍມີການເຂົ້າຮ່ວມຂອງປະຊາຊົນທີ່ອາໄສຢູ່ໃນ ແລະ ຕິດກັບທີ່ດິນກະສິກຳ ເພື່ອປົກປັກຮັກສາຊີວະນານາພັນດ້ວຍການສຳຫຼວດ, ກຳນົດເຂດ, ຂຶ້ນບັນຊີ ພັນໄມ້, ພັນພືດ, ພັນສັດນ້ຳ, ພັນສັດປ່າ ແລະ ເຄື່ອງປ່າຂອງດົງ, ກຳນົດແຜນການອະນຸລັກປົກປັກຮັກສາ ແລະ ຟື້ນຟູ ຕາມຫຼັກວິທະຍາສາດ ແລະ ຕາມກົດໝາຍ.

**ມາດຕາ 34 ການຄຸ້ມຄອງ ແລະ ຫຼຸດຜ່ອນຜົນກະທົບຂອງໂຄງການລົງທຶນ**

ຂະແໜງການຄຸ້ມຄອງທີ່ດິນກະສິກຳ ເປັນເຈົ້າການ ປະສານສົມທົບກັບ ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ແລະ ການມີສ່ວນຮ່ວມຂອງປະຊາຊົນທີ່ອາໄສຢູ່ໃນ ຫຼື ຕິດກັບເຂດໂຄງການ ເພື່ອຄຸ້ມຄອງ, ຕິດຕາມ ແລະ ກວດກາໂຄງການລົງທຶນຕ່າງໆ, ຮັບປະກັນການນຳໃຊ້ທີ່ດິນກະສິກຳແບບຍືນຍົງ, ການແບ່ງປັນຜົນປະໂຫຍດຢ່າງເປັນທຳ, ການປະເມີນ ແລະ ຄຸ້ມຄອງຜົນກະທົບຕໍ່ສິ່ງແວດລ້ອມ, ການຈັດຕັ້ງປະຕິບັດລຳດັບມາດຕະການຫຼຸດຜ່ອນຜົນກະທົບ ແລະ ການທົດແທນຄ່າເສຍຫາຍ.

## ໝວດທີ 6
## ການພັດທະນາທີ່ດິນກະສິກຳ

### ມາດຕາ 35 ການພັດທະນາທີ່ດິນກະສິກຳ

ອົງການຄຸ້ມຄອງ ແລະ ກວດກາ ວຽກງານທີ່ດິນກະສິກຳ ເປັນເຈົ້າການ ໃນການພັດທະນາທີ່ດິນກະສິກຳ ເພື່ອຍົກສູງສະມັດຖະພາບຜົນຜະລິດໃຫ້ສູງຂຶ້ນ ດ້ວຍການວາງນະໂຍບາຍ, ວິທີການ ແລະ ມາດຕະການກ່ຽວກັບການຮັກສາ ແລະ ປ່ຽນແປງສະພາບດິນ, ປັບປຸງ, ຟື້ນຟູດິນໃຫ້ມີຄຸນນະພາບດີ ແລະ ມີມູນຄ່າເພີ່ມຂຶ້ນ ໂດຍປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ.

ການພັດທະນາທີ່ດິນກະສິກຳ ປະກອບດ້ວຍ ວິທີການ ດັ່ງນີ້:

1. ການຟື້ນຟູດິນກະສິກຳ;
2. ການປັບປຸງດິນກະສິກຳ;
3. ການປູກພືດໝູນວຽນ;
4. ການນຳໃຊ້ຝຸ່ນ;
5. ການສ້າງຕົວແບບພັດທະນາທີ່ດິນກະສິກຳ.

### ມາດຕາ 36 ການຟື້ນຟູດິນກະສິກຳ

ຂະແໜງການກະສິກຳ ແລະ ປ່າໄມ້ ເປັນເຈົ້າການ ປະສານສົມທົບກັບ ຂະແໜງການ, ອົງການ, ຂະແໜງການອື່ນ, ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ແລະ ພາກສ່ວນອື່ນ ຟື້ນຟູດິນກະສິກຳ ດ້ວຍການແກ້ໄຂຜົນກະທົບ ຫຼື ການເຊື່ອມໂຊມຂອງດິນ ທີ່ເກີດຈາກ ການກະທຳຂອງມະນຸດ ຫຼື ທຳມະຊາດ ໃຫ້ມີການຟື້ນຕົວ ແລະ ໄດ້ຮັບການປັວແປງໃຫ້ຢູ່ໃນສະພາບທີ່ດີ, ລະບົບນິເວດ ມີຄວາມສົມດຸນ ແລະ ສາມາດນຳໃຊ້ເຂົ້າໃນການຜະລິດ ຢ່າງມີປະສິດທິຜົນ ດ້ວຍວິທີການຕ່າງໆ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 35 ຂອງດຳລັດສະບັບນີ້.

### ມາດຕາ 37 ການປັບປຸງດິນກະສິກຳ

ຂະແໜງການກະສິກຳ ແລະ ປ່າໄມ້ ເປັນເຈົ້າການ ປະສານສົມທົບກັບ ຂະແໜງການ, ອົງການ, ຂະແໜງການອື່ນ, ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ແລະ ພາກສ່ວນອື່ນ ປັບປຸງດິນກະສິກຳ ດ້ວຍການນຳໃຊ້ປັດໄຈການຜະລິດ, ເຕັກນິກ, ເຕັກໂນໂລຊີ ແລະ ວິທີການຕ່າງໆ ເຮັດໃຫ້ດິນມີຄວາມອຸດົມສົມບູນ, ສາມາດຕອບສະໜອງທາດອາຫານໃຫ້ພືດຢ່າງພຽງພໍ ແນໃສ່ເພີ່ມສະມັດຕະພາບການຜະລິດ ຕໍ່ຫົວໜ່ວຍພື້ນທີ່ ແລະ ສາມາດນຳໃຊ້ທີ່ດິນຢ່າງຍືນຍົງ.

### ມາດຕາ 38 ການປູກພືດໝູນວຽນ

ຂະແໜງການກະສິກຳ ແລະ ປ່າໄມ້ ເປັນເຈົ້າການ ປະສານສົມທົບກັບ ຂະແໜງການ, ອົງການ, ຂະແໜງການອື່ນ, ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ແລະ ພາກສ່ວນອື່ນ ປັບປຸງດິນກະສິກຳ ດ້ວຍການປູກພືດຊະນິດຕ່າງໆ ສັບປ່ຽນກັນ ເປັນຮອບວຽນ ຕາມເຕັກນິກວິທີການ ໃນພື້ນທີ່ດຽວກັນ, ຊ່ວຍປັບປຸງບຳລຸງດິນ, ຫຼຸດຜ່ອນການແຜ່ລະບາດຂອງ ພະຍາດ, ແມງໄມ້, ສັດຕູພືດ.

### ມາດຕາ 39 ການນຳໃຊ້ຝຸ່ນ

ຂະແໜງການກະສິກຳ ແລະ ປ່າໄມ້ ເປັນເຈົ້າການ ປະສານສົມທົບກັບ ຂະແໜງການ, ອົງການ, ຂະແໜງການອື່ນ, ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ແລະ ພາກສ່ວນອື່ນ ປັບປຸງດິນກະສິກຳ ດ້ວຍການເພີ່ມທາດອາຫານພືດຕ່າງໆ ລົງໃນດິນ. ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ນຳໃຊ້ຝຸ່ນ ຕ້ອງປະຕິບັດຕາມເຕັກນິກວິຊາການຢ່າງເຄັ່ງຄັດ ດ້ວຍການນຳໃຊ້ຝຸ່ນ (ຝຸ່ນອານົງຄະທາດ, ຝຸ່ນອົງຄະທາດ) ໃຫ້ຖືກຕາມ ສູດຝຸ່ນ, ອັດຕາ, ເວລາ

ແລະ ວິທີການໃສ່ ຕໍ່ກັບດິນ ແລະ ພືດ, ຮັບປະກັນບໍ່ໃຫ້ເປັນອັນຕະລາຍຕໍ່ ພືດ, ສຸຂະພາບຂອງ ຄົນ, ສັດ ແລະ ສິ່ງແວດລ້ອມ.

### ມາດຕາ 40 ການສ້າງຕົວແບບພັດທະນາທີ່ດິນກະສິກຳ

ຂະແໜງການກະສິກຳ ແລະ ປ່າໄມ້ ເປັນເຈົ້າການ ປະສານສົມທົບກັບ ຂະແໜງການ, ອົງການ, ຂະແໜງການອື່ນ, ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ແລະ ພາກສ່ວນອື່ນ ປັບປຸງດິນກະສິກຳ ດ້ວຍການສ້າງຄວາມເຂັ້ມແຂງໃຫ້ຊາວກະສິກອນ ໃນພື້ນທີ່ຈຸດສຸມທຳການຜະລິດ ໂດຍການຖ່າຍທອດເຕັກນິກການຈັດການ ດິນ, ນໍ້າ ແລະ ຝຸ່ນ ເພື່ອໃຫ້ສາມາດດຳເນີນການຜະລິດ ໃນພື້ນທີ່ດັ່ງກ່າວໄດ້ ຢ່າງມີປະສິດທິຜົນ.

ຂະແໜງການກະສິກຳ ແລະ ປ່າໄມ້ ເປັນເຈົ້າການ ໃນການສ້າງຕົວແທນຊາວກະສິກອນ ໃຫ້ສາມາດຮູ້ ແລະ ປະຕິບັດເຕັກນິກການຈັດການ ດິນ, ນໍ້າ, ຝຸ່ນ ຕໍ່ການປູກພືດ ໂດຍຜ່ານການຝຶກອົບຮົມ ແລະ ປະຕິບັດຕົວຈິງ ໃຫ້ມີຄວາມຊຳນານງານ ສາມາດນຳພາຊາວກະສິກອນ ເພື່ອຊ່ວຍພັດທະນາທີ່ດິນ ໃຫ້ມີປະສິດທິຜົນສູງ.

ອົງການຄຸ້ມຄອງ ແລະ ກວດກາ ວຽກງານທີ່ດິນກະສິກຳ ເປັນເຈົ້າການປະສານສົມທົບກັບອົງການປົກຄອງທ້ອງຖິ່ນ ສ້າງຕົວແບບພັດທະນາທີ່ດິນກະສິກຳ ແລະ ອາສາສະໝັກໝໍດິນຂັ້ນບ້ານ.

## ໝວດທີ 7
## ການນຳໃຊ້ທີ່ດິນກະສິກຳ

### ມາດຕາ 41 ການນຳໃຊ້ທີ່ດິນກະສິກຳ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຕ້ອງນຳໃຊ້ທີ່ດິນກະສິກຳ ເຂົ້າໃນການຜະລິດ ຢ່າງຖືກຕ້ອງຕາມເປົ້າໝາຍ, ສອດຄ່ອງກັບແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ, ແຜນຍຸດທະສາດ ແລະ ແຜນການນຳໃຊ້ທີ່ດິນດັ່ງກ່າວ ຕາມທ່າແຮງຂອງແຕ່ລະເຂດ, ຄວາມສາມາດດ້ານແຮງງານແຕ່ລະຄອບຄົວ ແລະ ທຶນຮອນຂອງຕົນ ໂດຍຖືເອົາການຍົກສູງສະມັດຖະພາບຂອງດິນເປັນຕົ້ນຕໍ ແລະ ຫັນໄປສູ່ການເຮັດກະເສດສຸມເທື່ອລະກ້າວ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຈຸດປະສົງນຳໃຊ້ທີ່ດິນກະສິກຳ ເຂົ້າໃນເປົ້າໝາຍອື່ນ ຕ້ອງຂໍອະນຸຍາດນຳອົງການຄຸ້ມຄອງ ແລະ ກວດກາ ວຽກງານທີ່ດິນກະສິກຳ ແລະ ຕ້ອງຮັບປະກັນໃຫ້ມີຜົນກະທົບໜ້ອຍທີ່ສຸດ ຕໍ່ປະລິມານ, ຄຸນນະພາບ ຂອງດິນ, ຊີວະນານາພັນ ແລະ ສິ່ງແວດລ້ອມ.

### ມາດຕາ 42 ປະເພດການນຳໃຊ້ທີ່ດິນກະສິກຳ

ການນຳໃຊ້ທີ່ດິນກະສິກຳ ແບ່ງອອກເປັນປະເພດ ດັ່ງນີ້:

1. ການນຳໃຊ້ ເພື່ອສາທາລະນະປະໂຫຍດ;
2. ການນຳໃຊ້ ເພື່ອຄອບຄົວ;
3. ການນຳໃຊ້ ຕາມປະເພນີ;
4. ການນຳໃຊ້ ເພື່ອທຸລະກິດ.

### ມາດຕາ 43 ການນຳໃຊ້ເພື່ອສາທາລະນະປະໂຫຍດ

ການນຳໃຊ້ເພື່ອສາທາລະນະປະໂຫຍດ ແມ່ນ ການນຳໃຊ້ທີ່ດິນກະສິກຳ ເພື່ອຜົນປະໂຫຍດຂອງປະຊາຊົນ, ຊຸມຊົນ ແລະ ສັງຄົມ ເຊັ່ນ ການສຶກສາຄົ້ນຄວ້າ, ການອະນຸລັກລະບົບນິເວດທີ່ດິນ ແລະ ຊີວະນານາພັນ, ການທ່ອງທ່ຽວແບບອະນຸລັກ, ການປົກປັກຮັກສາສະຖານທີ່ ທີ່ມີຄວາມສຳຄັນ ແລະ ມີຄຸນຄ່າທາງປະຫວັດສາດ, ວັດທະນະທຳ ຊຶ່ງການນຳໃຊ້ນັ້ນຕ້ອງປະຕິບັດລຳດັບມາດຕະການຫຼຸດຜ່ອນຜົນກະທົບ ແລະ ສອດຄ່ອງກັບແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ, ແຜນພັດທະນາເສດຖະກິດ-ສັງຄົມ ຂອງທ້ອງຖິ່ນ.

**ມາດຕາ 44 ການນຳໃຊ້ເພື່ອຄອບຄົວ**

ການນຳໃຊ້ເພື່ອຄອບຄົວ ແມ່ນ ການນຳໃຊ້ທີ່ດິນກະສິກຳ ເຂົ້າໃນການ ປູກຝັງ, ລ້ຽງສັດ, ການປະມົງ ເພື່ອຄອບຄົວ ທີ່ບໍ່ມີຈຸດປະສົງທາງການຄ້າ ຊຶ່ງການນຳໃຊ້ດັ່ງກ່າວ ຕ້ອງດຳເນີນໃນເຂດທີ່ລັດຈັດສັນໃຫ້ເທົ່ານັ້ນ.

**ມາດຕາ 45 ການນຳໃຊ້ຕາມປະເພນີ**

ການນຳໃຊ້ຕາມປະເພນີ ແມ່ນ ການນຳໃຊ້ທີ່ດິນກະສິກຳ ຈັດງານບຸນປະເພນີ, ພິທີກຳທາງສາສະໜາ ແລະ ກິດຈະກຳອື່ນ ຢ່າງເປັນປົກກະຕິ ແລະ ຕໍ່ເນື່ອງກັນມາ ຊຶ່ງການນຳໃຊ້ດັ່ງກ່າວ ຕ້ອງດຳເນີນໃນເຂດທີ່ລັດກຳນົດໃຫ້ເທົ່ານັ້ນ.

**ມາດຕາ 46 ການນຳໃຊ້ເພື່ອທຸລະກິດ**

ການນຳໃຊ້ເພື່ອທຸລະກິດ ແມ່ນ ການນຳໃຊ້ທີ່ດິນກະສິກຳ ເຂົ້າໃນການ ຜະລິດ, ທ່ອງທ່ຽວທີ່ຕິດພັນກັບກະສິກຳ, ສະຖານທີ່ພັກຜ່ອນ, ການຄ້າ, ການບໍລິການ, ການບໍລິການດ້ານລະບົບນິເວດ, ການຖ່າຍທຳຮູບເງົາ, ສາລະຄະດີ ແລະ ກິດຈະການອື່ນ ບົນພື້ນຖານການນຳໃຊ້ແບບຍືນຍົງ, ປະຕິບັດລຳດັບມາດຕະການຫຼຸດຜ່ອນຜົນກະທົບ ແລະ ສອດຄ່ອງກັບແຜນແມ່ບົດຈັດສັນທີ່ດິນແຫ່ງຊາດ, ຍຸດທະສາດການຄຸ້ມຄອງ, ການນຳໃຊ້ຊັບພະຍາກອນ.

**ມາດຕາ 47 ສິດ ຂອງຜູ້ນຳໃຊ້ທີ່ດິນກະສິກຳ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຮັບອະນຸຍາດນຳໃຊ້ທີ່ດິນກະສິກຳ ມີສິດ ດັ່ງນີ້:

1. ນຳໃຊ້ທີ່ດິນກະສິກຳໃນຂອບເຂດເນື້ອທີ່ ແລະ/ຫຼື ໄລຍະເວລາທີ່ໄດ້ຮັບອະນຸຍາດ ໂດຍສອດຄ່ອງກັບແຜນການນຳໃຊ້ທີ່ດິນກະສິກຳ ແລະ ລະບຽບການທີ່ກ່ຽວຂ້ອງ;
2. ໄດ້ຮັບໝາກຜົນຈາກການນຳໃຊ້ທີ່ດິນກະສິກຳ;
3. ໄດ້ຮັບການປົກປ້ອງຜົນປະໂຫຍດຈາກການນຳໃຊ້, ປົກປັກຮັກສາ, ພັດທະນາ ແລະ ຟື້ນຟູທີ່ດິນກະສິກຳ;
4. ໄດ້ຮັບນະໂຍບາຍສົ່ງເສີມການຜະລິດ, ການລົງທຶນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
5. ນຳໃຊ້ສິດອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 48 ພັນທະ ຂອງຜູ້ນຳໃຊ້ທີ່ດິນກະສິກຳ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຮັບອະນຸຍາດນຳໃຊ້ທີ່ດິນກະສິກຳ ມີພັນທະ ດັ່ງນີ້:

1. ນຳໃຊ້ທີ່ດິນກະສິກຳ ໃຫ້ຖືກຕ້ອງຕາມເປົ້າໝາຍທີ່ໄດ້ຮັບອະນຸຍາດ ແລະ ສອດຄ່ອງກັບແຜນການນຳໃຊ້;
2. ປົກປັກຮັກສາ ແລະ ພັດທະນາ ທີ່ດິນກະສິກຳ ໃຫ້ຢູ່ໃນສະພາບດີ, ບໍ່ໃຫ້ມີການເຊາະເຈື່ອນ, ຍຸບລົງ, ເສື່ອມໂຊມ, ບໍ່ສ້າງຄວາມເສຍຫາຍ ຕໍ່ທີ່ດິນກະສິກຳ ແລະ ບໍ່ສ້າງຜົນກະທົບອັນບໍ່ດີ ຕໍ່ສິ່ງແວດລ້ອມ;
3. ທົດແທນຄ່າເສຍຫາຍທີ່ຕົນໄດ້ກໍ່ຂຶ້ນ;
4. ຈ່າຍຄ່າສຳລັບການຈັດຕັ້ງປະຕິບັດລຳດັບມາດຕະການຫຼຸດຜ່ອນຜົນກະທົບ, ຄ່າທຳນຽມ ແລະ ຄ່າບໍລິການ;
5. ໃຫ້ການຮ່ວມມື ແລະ ອຳນວຍຄວາມສະດວກແກ່ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ ຂອງລັດ ໃນການຄຸ້ມຄອງ ແລະ ຕິດຕາມກວດກາ ທີ່ດິນກະສິກຳ;
6. ປະຕິບັດພັນທະອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 8
## ການຫັນປ່ຽນທີ່ດິນ ແລະ ເປົ້າໝາຍການນຳໃຊ້ທີ່ດິນກະສິກຳ

**ມາດຕາ 49 ການຫັນປ່ຽນທີ່ດິນກະສິກຳ**

ການຫັນປ່ຽນທີ່ດິນກະສິກຳ ແມ່ນ ການຫັນປ່ຽນທີ່ດິນກະສິກຳ ໄປເປັນທີ່ດິນປະເພດອື່ນ ຊຶ່ງຈະດຳເນີນໄດ້ກໍຕໍ່ເມື່ອ ເຫັນວ່າ ມີຄວາມຈຳເປັນ ນຳໃຊ້ເຂົ້າໃນເປົ້າໝາຍອື່ນ ເພື່ອຮັບໃຊ້ຜົນປະໂຫຍດສູງສຸດຂອງຊາດ ແລະ ຊີວິດການເປັນຢູ່ຂອງປະຊາຊົນ ໂດຍສອດຄ່ອງກັບແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ.

**ມາດຕາ 50 ຮູບການຫັນປ່ຽນທີ່ດິນກະສິກຳ**

ຮູບການຫັນປ່ຽນທີ່ດິນກະສິກຳ ມີ ດັ່ງນີ້:

1. ການຫັນປ່ຽນທີ່ດິນກະສິກຳ ລັກສະນະຊົ່ວຄາວ;
2. ການຫັນປ່ຽນທີ່ດິນກະສິກຳ ລັກສະນະຖາວອນ.

**ມາດຕາ 51 ການຫັນປ່ຽນທີ່ດິນກະສິກຳລັກສະນະຊົ່ວຄາວ**

ການຫັນປ່ຽນທີ່ດິນກະສິກຳລັກສະນະຊົ່ວຄາວ ແມ່ນ ການຫັນປ່ຽນທີ່ດິນກະສິກຳໄປເປັນທີ່ດິນປະເພດອື່ນ ເພື່ອດຳເນີນກິດຈະການໃດໜຶ່ງ ພາຍຫຼັງກິດຈະການດັ່ງກ່າວສິ້ນສຸດແລ້ວ ທີ່ດິນດັ່ງກ່າວນັ້ນ ກໍຕ້ອງກັບຄືນມາເປັນທີ່ດິນກະສິກຳ ຊຶ່ງໃນການຫັນປ່ຽນນັ້ນ ຕ້ອງໄດ້ຂຸດລອກຊັ້ນໜ້າດິນໄວ້ ໃນຄວາມເລິກຢ່າງໜ້ອຍ ເຈັດສິບຊັງຕີແມັດ ເທິງຊັ້ນຫີນເຈືອປົນ ຕາມຄວາມເໝາະສົມ ຂອງແຕ່ລະສະພາບພື້ນທີ່ ແລ້ວໃຫ້ເອົາດິນດັ່ງກ່າວມາຖົມຄືນໃຫ້ຢູ່ໃນສະພາບດີ ພາຍຫຼັງສິ້ນສຸດກິດຈະການດັ່ງກ່າວ ໂດຍມີການກວດກາ ແລະ ຢັ້ງຢືນຈາກຂະແໜງການກະສິກຳ ແລະ ປ່າໄມ້.

ກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ກຳນົດລາຍລະອຽດ ກ່ຽວກັບການປັບປຸງຊັ້ນໜ້າດິນຄືນ ພາຍຫຼັງມີການຫັນປ່ຽນທີ່ດິນກະສິກຳລັກສະນະຊົ່ວຄາວ.

**ມາດຕາ 52 ການຫັນປ່ຽນທີ່ດິນກະສິກຳລັກສະນະຖາວອນ**

ການຫັນປ່ຽນທີ່ດິນກະສິກຳລັກສະນະຖາວອນ ແມ່ນ ການຫັນປ່ຽນທີ່ດິນກະສິກຳ ໄປເປັນທີ່ດິນປະເພດອື່ນ ເພື່ອຮັບໃຊ້ຈຸດປະສົງໃດໜຶ່ງທີ່ມີລັກສະນະຖາວອນ ເປັນຕົ້ນ ຫັນປ່ຽນເປັນທີ່ດິນ ປຸກສ້າງ, ຄົມມະນາຄົມ, ອຸດສາຫະກຳ.

**ມາດຕາ 53 ຂັ້ນຕອນການຫັນປ່ຽນທີ່ດິນກະສິກຳ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງຫັນປ່ຽນທີ່ດິນກະສິກຳ ຕ້ອງຍື່ນຄຳຮ້ອງຕໍ່ ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ. ພາຍຫຼັງໄດ້ຮັບການສະເໜີແລ້ວ ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ຕ້ອງປະສານສົມທົບກັບ ຂະແໜງການກະສິກຳ ແລະ ປ່າໄມ້ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ຄົ້ນຄວ້າກ່ຽວກັບການຫັນປ່ຽນ ເພື່ອສະເໜີຂັ້ນເທິງ ພິຈາລະນາ.

ຂະແໜງການກະສິກຳ ແລະ ປ່າໄມ້ ເປັນເຈົ້າການ ປະສານສົມທົບກັບ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ລົງກວດກາ ເກັບກຳຂໍ້ມູນຕອນດິນ, ເປົ້າໝາຍການຫັນປ່ຽນ ເພື່ອມີຄຳເຫັນທາງດ້ານວິຊາການ ສະເໜີຕໍ່ຂະແໜງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ.

**ມາດຕາ 54 ເອກະສານປະກອບການຂໍຫັນປ່ຽນທີ່ດິນກະສິກຳ**

ເອກະສານປະກອບການຫັນປ່ຽນທີ່ດິນກະສິກຳ ປະກອບ ມີ ດັ່ງນີ້:

1. ໃບຄຳຮ້ອງ ຂໍຫັນປ່ຽນ ຕາມແບບພິມທີ່ກະຊວງກະສິກຳ ແລະ ປ່າໄມ້ ກຳນົດ;
2. ບົດວິພາກເສດຖະກິດ-ເຕັກນິກ;

3. ໃບຕາດິນ, ໃບແຜນທີ່ດິນ ຫຼື ໃບຢັ້ງຢືນການນຳໃຊ້ທີ່ດິນກະສິກຳ;
4. ໃບເສຍຄ່າອາກອນທີ່ດິນ;
5. ສຳເນົາ ສຳມະໂນຄົວ, ໃບຢັ້ງຢືນທີ່ຢູ່ ຫຼື ບັດປະຈຳຕົວ;
6. ເອກະສານອື່ນ ຕາມການຮຽກຮ້ອງຂອງຂະແໜງການກະສິກຳ ແລະ ປ່າໄມ້.

### ມາດຕາ 55 ການຕົກລົງຫັນປ່ຽນທີ່ດິນກະສິກຳ

ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ປະສານສົມທົບກັບ ກະຊວງກະສິກຳ ແລະ ປ່າໄມ້ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ຄົ້ນຄວ້າ ສະເໜີລັດຖະບານ ພິຈາລະນາຕົກລົງຫັນປ່ຽນທີ່ດິນກະສິກຳ ທີ່ມີເນື້ອທີ່ແຕ່ ຫ້າສິບ ເຮັກຕາ ຫາ ໜຶ່ງຮ້ອຍ ເຮັກຕາ ຕໍ່ໜຶ່ງກິດຈະການ ໄປເປັນທີ່ດິນປະເພດອື່ນ ຫຼື ພິຈາລະນາ ນຳສະເໜີຕໍ່ສະພາແຫ່ງຊາດ ຮັບຮອງ ໃນກໍລະນີ ເນື້ອທີ່ດິນກະສິກຳເກີນ ໜຶ່ງຮ້ອຍ ເຮັກຕາ.

ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ປະສານສົມທົບກັບ ພະແນກກະສິກຳ ແລະ ປ່າໄມ້ ແລະ ອົງການປົກຄອງຂັ້ນເມືອງທີ່ກ່ຽວຂ້ອງ ຄົ້ນຄວ້າ ສະເໜີອົງການປົກຄອງຂັ້ນແຂວງ ພິຈາລະນານຳສະເໜີຕໍ່ ສະພາປະຊາຊົນຂັ້ນແຂວງ ພິຈາລະນາຕົກລົງຫັນປ່ຽນທີ່ດິນກະສິກຳ ທີ່ມີເນື້ອທີ່ຕໍ່າກວ່າ ຫ້າສິບ ເຮັກຕາ ຕໍ່ໜຶ່ງກິດຈະການ ໄປເປັນທີ່ດິນປະເພດອື່ນ.

### ມາດຕາ 56 ການປ່ຽນເປົ້າໝາຍການນຳໃຊ້ທີ່ດິນກະສິກຳ

ການປ່ຽນເປົ້າໝາຍການນຳໃຊ້ທີ່ດິນກະສິກຳ ແມ່ນ ການປ່ຽນເປົ້າໝາຍການນຳໃຊ້ທີ່ດິນກະສິກຳ ຈາກເປົ້າໝາຍໜຶ່ງ ໄປສູ່ເປົ້າໝາຍອື່ນ ເປັນຕົ້ນ ຈາກທີ່ດິນນາ ໄປເປັນ ທີ່ດິນປູກຕົ້ນໄມ້ໃຫ້ໝາກ ຫຼື ພືດອາຍຸຍາວ.

ການປ່ຽນເປົ້າໝາຍການນຳໃຊ້ ທີ່ດິນນາ ແລະ ທີ່ດິນປູກພືດອາຍຸຍາວ ຫຼື ໄມ້ໃຫ້ໝາກ ໄປເປັນເປົ້າໝາຍການນຳໃຊ້ອື່ນ ຕ້ອງໄດ້ຮັບອະນຸຍາດ ຈາກຂະແໜງການກະສິກຳ ແລະ ປ່າໄມ້ ຍົກເວັ້ນເປົ້າໝາຍນຳໃຊ້ ເພື່ອຊົນລະປະທານ.

### ມາດຕາ 57 ການສະເໜີຂໍປ່ຽນເປົ້າໝາຍການນຳໃຊ້ທີ່ດິນກະສິກຳ

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງປ່ຽນເປົ້າໝາຍການນຳໃຊ້ທີ່ດິນກະສິກຳ ໃຫ້ຍື່ນຄຳຮ້ອງ ພ້ອມດ້ວຍເອກະສານປະກອບ ຕໍ່ ຂະແໜງການກະສິກຳ ແລະ ປ່າໄມ້.

ຂະແໜງການກະສິກຳ ແລະ ປ່າໄມ້ ປະສານສົມທົບກັບ ຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ລົງກວດກາ ເກັບກຳຂໍ້ມູນຕອນດິນເປົ້າໝາຍ ແລະ ຄົ້ນຄວ້າ ພິຈາລະນາ ອະນຸຍາດການປ່ຽນເປົ້າໝາຍການນຳໃຊ້ທີ່ດິນກະສິກຳ ພາຍໃນເວລາ ສິບຫ້າວັນ ນັບແຕ່ວັນໄດ້ຮັບຄຳຮ້ອງ ພ້ອມເອກະສານປະກອບຢ່າງຄົບຖ້ວນ ເປັນຕົ້ນໄປ.

### ມາດຕາ 58 ເອກະສານປະກອບການຂໍປ່ຽນເປົ້າໝາຍການນຳໃຊ້ທີ່ດິນກະສິກຳ

ເອກະສານປະກອບການຂໍປ່ຽນເປົ້າໝາຍການນຳໃຊ້ທີ່ດິນກະສິກຳ ມີ ດັ່ງນີ້:

1. ຄຳຮ້ອງຂໍປ່ຽນເປົ້າໝາຍການນຳໃຊ້ທີ່ດິນກະສິກຳ ຕາມແບບພິມທີ່ກະຊວງກະສິກຳ ແລະ ປ່າໄມ້ກຳນົດ;
2. ສຳເນົາ ໃບຕາດິນ, ໃບແຜນທີ່ດິນ ຫຼື ໃບຢັ້ງຢືນການນຳໃຊ້ທີ່ດິນກະສິກຳ;
3. ໃບເສຍຄ່າອາກອນທີ່ດິນ;
4. ສຳເນົາ ສຳມະໂນຄົວ, ໃບຢັ້ງຢືນທີ່ຢູ່ ຫຼື ບັດປະຈຳຕົວ;
5. ສຳເນົາ ໃບທະບຽນວິສາຫະກິດ ແລະ ໃບອະນຸຍາດດຳເນີນທຸລະກິດ ສຳລັບນິຕິບຸກຄົນ;
6. ເອກະສານອື່ນ ຕາມການຮຽກຮ້ອງຂອງຂະແໜງກະສິກຳ ແລະ ປ່າໄມ້.

**ມາດຕາ 59 ການຕົກລົງປ່ຽນເປົ້າໝາຍການນຳໃຊ້ທີ່ດິນກະສິກຳ**

ກະຊວງກະສິກຳ ແລະ ປ່າໄມ້ ຕົກລົງປ່ຽນເປົ້າໝາຍການນຳໃຊ້ທີ່ດິນກະສິກຳ ທີ່ມີເນື້ອທີ່ຫຼາຍກວ່າ ຊາວ ຫາ ຫ້າສິບ ເຮັກຕາ ຕໍ່ໜຶ່ງກິດຈະການ. ໃນກໍລະນີ ເນື້ອທີ່ດິນກະສິກຳ ຫຼາຍກວ່າ ຫ້າສິບເຮັກຕາ ໃຫ້ນຳສະເໜີຕໍ່ລັດຖະບານ ພິຈາລະນາ.

ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ຕົກລົງປ່ຽນເປົ້າໝາຍການນຳໃຊ້ທີ່ດິນກະສິກຳ ທີ່ມີເນື້ອທີ່ຫຼາຍກວ່າ ສາມ ຫາ ຊາວ ເຮັກຕາ ຕໍ່ໜຶ່ງກິດຈະການ.

ຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ ຕົກລົງປ່ຽນເປົ້າໝາຍການນຳໃຊ້ທີ່ດິນກະສິກຳ ທີ່ມີເນື້ອທີ່ສາມເຮັກຕາ ລົງມາ ຕໍ່ໜຶ່ງກິດຈະການ.

## ໝວດທີ 9
## ການເຊົ່າ ຫຼື ສຳປະທານ ທີ່ດິນກະສິກຳ

**ມາດຕາ 60 ການເຊົ່າ ຫຼື ສຳປະທານ ທີ່ດິນກະສິກຳ**

ການເຊົ່າ ຫຼື ສຳປະທານ ທີ່ດິນກະສິກຳ ແມ່ນ ການນຳໃຊ້ທີ່ດິນກະສິກຳ ເພື່ອດຳເນີນທຸລະກິດ ກ່ຽວກັບກະສິກຳ, ການທ່ອງທ່ຽວ, ການຄ້າ, ການບໍລິການ, ການບໍລິການດ້ານລະບົບນິເວດ, ການຖ່າຍທຳຮູບເງົາ, ສາລະຄະດີ ແລະ ກິດຈະການອື່ນ.

ການເຊົ່າ ຫຼື ສຳປະທານ ທີ່ດິນກະສິກຳ ຕ້ອງດຳເນີນໃນເຂດທີ່ໄດ້ຈັດສັນໄວ້ເທົ່ານັ້ນ ແລະ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສຳຫຼວດ, ສຶກສາ ຂໍ້ມູນ ກ່ຽວກັບສະພາບເສດຖະກິດ-ສັງຄົມ, ຄວາມເໝາະສົມທາງທຳມະຊາດ ແລະ ກິດຈະການທີ່ຈະດຳເນີນ;

2. ຜູ້ເຊົ່າ ຫຼື ສຳປະທານ ຕ້ອງດຳເນີນການສ້າງບົດວິພາກເສດຖະກິດ-ເຕັກນິກ, ການສຶກສາເບື້ອງຕົ້ນກ່ຽວກັບຜົນກະທົບຕໍ່ສິ່ງແວດລ້ອມ ແລະ/ຫຼື ການປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ ລວມທັງສ້າງແຜນຄຸ້ມຄອງຕິດຕາມກວດກາສິ່ງແວດລ້ອມ ແລະ ມາດຕະການຫຼຸດຜ່ອນຜົນກະທົບທີ່ເໝາະສົມ ໂດຍຜ່ານການຢັ້ງຢືນ ແລະ ຮັບຮອງ ຈາກຂະແໜງການທີ່ກ່ຽວຂ້ອງ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ;

3. ສ້າງແຜນດຳເນີນງານ ໂດຍເລັ່ງໃສ່ການປົກປັກຮັກສາສິ່ງແວດລ້ອມ, ການບຸກເບີກເນື້ອທີ່, ການສົ່ງເສີມການມີສ່ວນຮ່ວມຂອງປະຊາຊົນ ໃນການດຳເນີນການຜະລິດ, ການນຳໃຊ້ເຕັກໂນໂລຊີ ຕະຫຼອດເຖິງການແບ່ງປັນຜົນປະໂຫຍດ.

ຫຼັງຈາກລັດຖະບານ ຫຼື ອົງການປົກຄອງຂັ້ນແຂວງ ອະນຸຍາດໃຫ້ເຊົ່າ ຫຼື ສຳປະທານ ທີ່ດິນກະສິກຳແລ້ວ ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມຂັ້ນແຂວງ ບ່ອນທີ່ດິນກະສິກຳຕັ້ງຢູ່ ອອກໃບຕາດິນລັດ ໂດຍອີງຕາມກຳນົດເວລາເຊົ່າ ຫຼື ສຳປະທານ.

**ມາດຕາ 61 ພັນທະ ຂອງຜູ້ເຊົ່າ ຫຼື ສຳປະທານ ທີ່ດິນກະສິກຳ**

ຜູ້ເຊົ່າ ຫຼື ຜູ້ສຳປະທານ ທີ່ດິນກະສິກຳ ມີພັນທະ ດັ່ງນີ້:

1. ຈັດຕັ້ງປະຕິບັດກົດໝາຍ, ລະບຽບການ ແລະ ແຜນການນຳໃຊ້ທີ່ດິນ ໃຫ້ຖືກຕ້ອງຕາມຈຸດປະສົງ ແລະ ເປົ້າໝາຍ;

2. ດຳເນີນການສຳຫຼວດ, ວິໄຈດິນ, ປະເມີນຄຸນນະພາບທີ່ດິນກະສິກຳກ່ອນ ແລະ ຫຼັງດຳເນີນກິດຈະການ ແລ້ວລາຍງານຜົນ ໃຫ້ອົງການຄຸ້ມຄອງ ແລະ ກວດກາ ວຽກງານທີ່ດິນກະສິກຳ;

3. ຈ່າຍຄ່າເຊົ່າ ຫຼື ຄ່າສຳປະທານ ທີ່ດິນກະສິກຳ, ຄ່າຊັບພະຍາກອນທຳມະຊາດ, ພາສີ, ອາກອນ, ຄ່າທຳນຽມ ແລະ ຄ່າບໍລິການ;

4. ທົດແທນຄ່າເສຍຫາຍ ໃຫ້ແກ່ຜູ້ໄດ້ຮັບຜົນກະທົບຈາກການດໍາເນີນກິດຈະການຂອງຕົນ;
5. ປະຕິບັດພັນທະດ້ານສິ່ງແວດລ້ອມ ຕາມກົດໝາຍ ແລະ ລະບຽບການ;
6. ປະຕິບັດລໍາດັບມາດຕະການຫຼຸດຜ່ອນຜົນກະທົບ;
7. ປະຕິບັດທາດສະພາບ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ;
8. ປະຕິບັດພັນທະອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 10
## ລະບົບຂໍ້ມູນ ຂ່າວສານ ທີ່ດິນກະສິກໍາ

**ມາດຕາ 62 ລະບົບຂໍ້ມູນ ຂ່າວສານ ທີ່ດິນກະສິກໍາ**

ລະບົບຂໍ້ມູນ ຂ່າວສານ ທີ່ດິນກະສິກໍາ ແມ່ນ ບ່ອນເກັບກໍາ, ສັງລວມ, ເກັບຮັກສາ, ວິເຄາະວິໄຈ, ເຜີຍແຜ່, ສະໜອງ ຂໍ້ມູນ ຂ່າວສານ ທີ່ດິນກະສິກໍາ ໃນຮູບແບບເຈ້ຍ ແລະ ຮູບແບບເອເລັກໂຕຣນິກ.

ກະຊວງກະສິກໍາ ແລະ ປ່າໄມ້ ສ້າງ, ປັບປຸງ, ຄຸ້ມຄອງ ແລະ ນໍາໃຊ້ ຂໍ້ມູນ ຂ່າວສານ ທີ່ດິນກະສິກໍາ ລວມທັງ ການສະໜອງ ແລະ ແລກປ່ຽນ ຂໍ້ມູນ ຂ່າວສານດັ່ງກ່າວ, ໂດຍການປະສານສົມທົບກັບ ກະຊວງ, ອົງການ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ.

ພະແນກກະສິກໍາ ແລະ ປ່າໄມ້ ຂັ້ນແຂວງ ຄຸ້ມຄອງ ແລະ ນໍາໃຊ້ ຂໍ້ມູນ ຂ່າວສານ ທີ່ດິນກະສິກໍາ ລວມທັງ ການສະໜອງ ແລະ ແລກປ່ຽນ ຂໍ້ມູນ ຂ່າວສານດັ່ງກ່າວ ເຂົ້າໃນຖານຂໍ້ມູນ, ໂດຍການປະສານສົມທົບກັບ ພະແນກການ, ອົງການ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ.

ຫ້ອງການກະສິກໍາ ແລະ ປ່າໄມ້ ຂັ້ນເມືອງ ຄຸ້ມຄອງ ແລະ ນໍາໃຊ້ ຂໍ້ມູນ ຂ່າວສານ ທີ່ດິນກະສິກໍາ ລວມທັງ ການສະໜອງ ແລະ ແລກປ່ຽນ ຂໍ້ມູນ ຂ່າວສານດັ່ງກ່າວ ເຂົ້າໃນຖານຂໍ້ມູນ, ໂດຍການປະສານສົມທົບກັບ ຫ້ອງການ, ອົງການ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ.

**ມາດຕາ 63 ການເຂົ້າເຖິງ ແລະ ນໍາໃຊ້ ຂໍ້ມູນ ຂ່າວສານທີ່ດິນກະສິກໍາ**

ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ມີຈຸດປະສົງນໍາໃຊ້ຂໍ້ມູນ ຂ່າວສານ ທີ່ດິນກະສິກໍາ ສາມາດ ເຂົ້າເຖິງ ແລະ ນໍາໃຊ້ ລະບົບຂໍ້ມູນ ຂ່າວສານ ທີ່ດິນກະສິກໍາ ເຂົ້າໃນການເຄື່ອນໄຫວວຽກງານຂອງຕົນ.

ການນໍາໃຊ້ຂໍ້ມູນ ຂ່າວສານ ທີ່ດິນກະສິກໍາ ເປັນຕົ້ນ ແຜນທີ່ດິນ, ແຜນທີ່ການນໍາໃຊ້ທີ່ດິນກະສິກໍາ, ແຜນທີ່ຄວາມເໝາະສົມຂອງທີ່ດິນຕໍ່ການປູກພືດ, ແຜນທີ່ຄວາມອຸດົມສົມບູນຂອງດິນ, ຂໍ້ມູນດິບ ຕ້ອງຂໍອະນຸຍາດ ນໍາອົງການຄຸ້ມຄອງ ແລະ ກວດກາ ວຽກງານທີ່ດິນກະສິກໍາ.

## ໝວດທີ 11
## ການມີສ່ວນຮ່ວມຂອງສັງຄົມ

**ມາດຕາ 64 ການມີສ່ວນຮ່ວມຂອງສັງຄົມ**

ການມີສ່ວນຮ່ວມຂອງສັງຄົມ ແມ່ນ ຂະບວນການປຶກສາຫາລື, ການສະໜອງຂໍ້ມູນ ຂ່າວສານ ແລະ ການຮັບຄໍາຄິດຄໍາເຫັນ ຂອງທຸກພາກສ່ວນໃນສັງຄົມ ໃນການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນໍາໃຊ້ ທີ່ດິນກະສິກໍາ ພ້ອມທັງ ຕິດຕາມ ກວດກາ ການຈັດຕັ້ງປະຕິບັດວຽກງານຄຸ້ມຄອງການນໍາໃຊ້ທີ່ດິນກະສິກໍາ ເພື່ອຮັບປະກັນຄວາມໂປ່ງໃສ, ຍຸຕິທໍາ ແລະ ມີປະສິດທິຜົນ.

ອົງການຄຸ້ມຄອງ ແລະ ກວດກາ ວຽກງານທີ່ດິນກະສິກໍາ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ ກ່ຽວຂ້ອງ ຕ້ອງສ້າງເງື່ອນໄຂໃຫ້ທຸກພາກສ່ວນໃນສັງຄົມ ມີສ່ວນຮ່ວມໃນການຄຸ້ມຄອງ, ການນໍາໃຊ້ທີ່ດິນ ກະສິກໍາ ເພື່ອຮັບປະກັນການປັບປຸງຊີວິດການເປັນຢູ່ຂອງເຂົາເຈົ້າໃຫ້ດີຂຶ້ນ.

**ມາດຕາ 65 ການປຸກຈິດສຳນຶກ**

ການປຸກຈິດສຳນຶກ ແມ່ນ ການສຶກສາອົບຮົມ ແລະ ໂຄສະນາເຜີຍແຜ່ ຄວາມໝາຍ ແລະ ຄວາມສຳຄັນ ຂອງວຽກງານທີ່ດິນກະສິກຳ ໃຫ້ສັງຄົມຮັບຮູ້ຢ່າງທົ່ວເຖິງ ໂດຍຜ່ານສື່ມວນຊົນ, ກຳນົດເຂົ້າໃນຫຼັກສູດການຮຽນ-ການສອນ, ຊຸກຍູ້ ແລະ ສົ່ງເສີມ ການສ້າງກິດຈະກຳຕ່າງໆກ່ຽວກັບ ວຽກງານຄຸ້ມຄອງທີ່ດິນກະສິກຳ ເພື່ອໃຫ້ທຸກຄົນຮັບຮູ້ ແລະ ເຂົ້າໃຈຄວາມໝາຍ ແລະ ຄວາມສຳຄັນ ຂອງທີ່ດິນກະສິກຳ ດ້ວຍການເປັນເຈົ້າການຂອງທຸກຂະແໜງການ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ການເຂົ້າຮ່ວມທຸກພາກສ່ວນທົ່ວສັງຄົມ.

## ໝວດທີ 12
## ຂໍ້ຫ້າມ

**ມາດຕາ 66 ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ມີພຶດຕິກຳໃດໜຶ່ງ ດັ່ງນີ້:

1. ຈັບຈອງ, ບຸກເບີກ, ເອົາທີ່ດິນກະສິກຳ ໄປຈັດສັນເປັນທີ່ດິນປຸກສ້າງ ຫຼື ດິນປະເພດອື່ນ ແລະ ນຳໃຊ້ທີ່ດິນກະສິກຳ ໂດຍບໍ່ຖືກຕ້ອງຕາມກົດໝາຍ ແລະ ລະບຽບການ;
2. ປ່ອຍທີ່ດິນນາເປັນເຮື້ອ;
3. ປູກພືດອາຍຸຍາວ ຫຼື ໄມ້ໃຫ້ໝາກ, ໄມ້ອຸດສາຫະກຳ ໃສ່ທີ່ດິນນາ ໂດຍບໍ່ໄດ້ຮັບອະນຸຍາດ;
4. ລະເມີດສັນຍາ ຫຼື ຊື້ ຂາຍສິດນຳໃຊ້ທີ່ດິນກະສິກຳ ທີ່ໄດ້ເຊົ່າ ແລະ ສຳປະທານແລ້ວ;
5. ໃຊ້ຄວາມຮຸນແຮງ ຫຼື ນາບຂູ່ ພະນັກງານຄຸ້ມຄອງທີ່ດິນກະສິກຳ;
6. ຍ້າຍ, ປ່ຽນແປງ ແລະ ທຳລາຍ ຫຼັກໝາຍເຂດ, ປ້າຍແຜນທີ່ ທີ່ດິນກະສິກຳ;
7. ນຳໃຊ້ ຢາປາບສັດຕູພືດ, ຢາຂ້າຫຍ້າ ເກີນຄ່າອະນຸຍາດ ໃນພື້ນທີ່ທີ່ດິນກະສິກຳ;
8. ຈູດເຟືອງ ແລະ ສິ່ງເສດເຫຼືອ, ປ່ອຍນ້ຳເສຍ, ສິ່ງເປິເປື້ອນ, ຍຶກຄູກັນນ້ຳ, ທີ່ມີຜົນກະທົບທາງລົບຕໍ່ທີ່ດິນກະສິກຳ;
9. ເອົາທີ່ດິນກະສິກຳ ໃຫ້ເຊົ່າ ເພື່ອດຳເນີນທຸລະກິດ ໂດຍບໍ່ໄດ້ຮັບການຢັ້ງຢືນ ແລະ ຈົດທະບຽນການເຄື່ອນໄຫວສິດນຳໃຊ້ທີ່ດິນ ຕາມກົດໝາຍ;
10. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 67 ຂໍ້ຫ້າມສຳລັບ ພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່**

ຫ້າມ ພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ ທີ່ຮັບຜິດຊອບວຽກງານທີ່ດິນກະສິກຳ ມີພຶດຕິກຳໃດໜຶ່ງ ດັ່ງນີ້:

1. ສວຍໃຊ້ສິດ, ໜ້າທີ່, ຕຳແໜ່ງ, ໃຊ້ຄວາມຮຸນແຮງ, ບັງຄັບ, ນາບຂູ່ ເພື່ອຜົນປະໂຫຍດສ່ວນຕົວ, ຄອບຄົວ, ຍາດພີ່ນ້ອງ ແລະ ພັກພວກ ຂອງຕົນ;
2. ທວງເອົາ, ຂໍເອົາ, ຮັບສິນບົນ ຈາກບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ;
3. ຢັ້ງຢືນ ຫຼື ອອກເອກະສານ ກ່ຽວກັບທີ່ດິນກະສິກຳ ໂດຍບໍ່ຖືກຕ້ອງຕາມກົດໝາຍ;
4. ກົດໜ່ວງ, ຖ່ວງດຶງ, ປອມແປງ ເອກະສານ ຫຼື ນຳໃຊ້ເອກະສານປອມ;
5. ໃຊ້ສິດ ຫຼື ໜ້າທີ່ ເກີນຂອບເຂດ ຊຶ່ງກໍ່ຄວາມເສຍຫາຍໃຫ້ແກ່ຜົນປະໂຫຍດ ຂອງລັດ, ລວມໝູ່ ຫຼື ສິດຜົນປະໂຫຍດອັນຊອບທຳ ຂອງປະຊາຊົນ ແລະ ນັກລົງທຶນທັງພາຍໃນ ແລະ ຕ່າງປະເທດ;
6. ເປັນ ນາຍໜ້າ, ທີ່ປຶກສາໃຫ້ແກ່ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບວຽກງານທີ່ດິນກະສິກຳ;
7. ເປີດເຜີຍຄວາມລັບຂອງ ລັດ ຫຼື ທາງລັດຖະການ, ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ;
8. ບິດເບືອນຄວາມຈິງ, ປົດບັງ, ເຊື່ອງອຳ ແລະ ປົກປ້ອງ ຫຼື ໃຫ້ຄວາມຮ່ວມມືກັບຜູ້ກະທຳຜິດ;

9. ທຳລາຍຫຼັກຖານ, ເອກະສານກ່ຽວກັບທີ່ດິນກະສິກຳ, ຍ້າຍ, ປ່ຽນແປງ ຫຼື ທຳລາຍ ຫຼັກໝາຍເຂດທີ່ດິນກະສິກຳ;

10. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ໝວດທີ 13
## ການຄຸ້ມຄອງ ແລະ ກວດກາ ວຽກງານທີ່ດິນກະສິກຳ

### ມາດຕາ 68 ອົງການຄຸ້ມຄອງ ແລະ ກວດກາ ວຽກງານທີ່ດິນກະສິກຳ

ກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ຮັບຜິດຊອບໂດຍກົງ ໃນການຄຸ້ມຄອງ ແລະ ກວດກາ ວຽກງານທີ່ດິນກະສິກຳ ແລະ ເປັນເຈົ້າການປະສານສົມທົບກັບ ກະຊວງ, ອົງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງ ແລະ ກວດກາ ວຽກງານທີ່ດິນກະສິກຳ ປະກອບດ້ວຍ:

1. ກະຊວງກະສິກຳ ແລະ ປ່າໄມ້;
2. ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ;
3. ຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ.

### ມາດຕາ 69 ສິດ ແລະ ໜ້າທີ່ ຂອງກະຊວງກະສິກຳ ແລະ ປ່າໄມ້

ກະຊວງກະສິກຳ ແລະ ປ່າໄມ້ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າ, ສ້າງ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານທີ່ດິນກະສິກຳ ເພື່ອສະເໜີລັດຖະບານ ພິຈາລະນາ;

2. ຜັນຂະຫຍາຍ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານທີ່ດິນກະສິກຳເປັນ ແຜນການ, ແຜນງານ, ໂຄງການ ຂອງຕົນ ພ້ອມທັງຈັດຕັ້ງປະຕິບັດ;

3. ໂຄສະນາ ເຜີຍແຜ່ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ລະບຽບການ, ແຜນການ, ແຜນງານ, ໂຄງການ ກ່ຽວກັບວຽກງານທີ່ດິນກະສິກຳ;

4. ສຳຫຼວດ ແລະ ສ້າງແຜນການນຳໃຊ້ທີ່ດິນກະສິກຳ ຂັ້ນສູນກາງ ໂດຍປະສານສົມທົບກັບກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ເພື່ອສະເໜີລັດຖະບານ ພິຈາລະນາ;

5. ຕິດຕາມ, ກວດກາ ແລະ ປະເມີນຜົນການ ນຳໃຊ້, ຫັນປ່ຽນ, ຫັນປ່ຽນເປົ້າໝາຍ, ເຊົ່າ ແລະ ສຳປະທານທີ່ດິນກະສິກຳ ໃນຂອບເຂດທົ່ວປະເທດ;

6. ອອກ, ໂຈະ ແລະ ລົບລ້າງ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບວຽກງານທີ່ດິນກະສິກຳ;

7. ສ້າງປື້ມຕິດຕາມ ແລະ ໃບຢັ້ງຢືນ ການນຳໃຊ້ທີ່ດິນກະສິກຳ ໃຫ້ເປັນເອກະພາບ ໃນຂອບເຂດທົ່ວປະເທດ;

8. ຄົ້ນຄວ້າ, ປະກອບຄຳເຫັນ ທາງດ້ານວິຊາການ ກ່ຽວກັບການສະເໜີຂໍສຳຫຼວດພື້ນທີ່ ເຊົ່າ ຫຼື ສຳປະທານທີ່ດິນກະສິກຳ;

9. ຄົ້ນຄວ້າ, ອະນຸມັດ ເປົ້າໝາຍການນຳໃຊ້ທີ່ດິນກະສິກຳ ແລະ ຢັ້ງຢືນການຫັນປ່ຽນທີ່ດິນກະສິກຳໄປເປັນທີ່ດິນປະເພດອື່ນ;

10. ສ້າງ, ຄຸ້ມຄອງ, ພັດທະນາ ແລະ ນຳໃຊ້ ຖານຂໍ້ມູນ ຂ່າວສານ ທີ່ດິນກະສິກຳ ຢ່າງລວມສູນ ໃນຂອບເຂດທົ່ວປະເທດ ພ້ອມທັງສະໜອງຂໍ້ມູນ ກ່ຽວກັບການນຳໃຊ້ທີ່ດິນກະສິກຳ ໃຫ້ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ໃນແຕ່ລະໄລຍະ;

11. ຮັບ, ພິຈາລະນາ ແລະ ແກ້ໄຂຄຳສະເໜີຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ກ່ຽວກັບວຽກງານທີ່ດິນກະສິກຳ;

12. ສ້າງ, ຍົກລະດັບ ແລະ ນຳໃຊ້ບຸກຄະລາກອນ ກ່ຽວກັບວຽກງານທີ່ດິນກະສິກຳ;

13. ປະສານສົມທົບກັບ ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ໃນການຈັດຕັ້ງປະຕິບັດວຽກງານທີ່ດິນກະສິກຳ;

14. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານທີ່ດິນກະສິກຳ;

15. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານທີ່ດິນກະສິກຳ ຕໍ່ລັດຖະບານ ຢ່າງເປັນປົກກະຕິ;

16. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 70 ສິດ ແລະ ໜ້າທີ່ ຂອງພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ**

ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານທີ່ດິນກະສິກຳ ຢ່າງເຂັ້ມງວດ;

2. ໂຄສະນາ ເຜີຍແຜ່ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ ແລະ ລະບຽບການ ກ່ຽວກັບວຽກງານທີ່ດິນກະສິກຳ;

3. ສຳຫຼວດ ແລະ ສ້າງແຜນການນຳໃຊ້ ທີ່ດິນກະສິກຳ ຂັ້ນທ້ອງຖິ່ນ ໂດຍປະສານສົມທົບກັບພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ພະແນກການ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ ເພື່ອສະເໜີອົງການປົກຄອງຂັ້ນແຂວງ ຮັບຮອງ;

4. ຕິດຕາມ, ກວດກາ ແລະ ປະເມີນຜົນ ການ ນຳໃຊ້, ຫັນປ່ຽນ, ຫັນປ່ຽນເປົ້າໝາຍ, ເຊົ່າ ຫຼື ສຳປະທານທີ່ດິນກະສິກຳ;

5. ອອກ, ໂຈະ ແລະ ລຶບລ້າງ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບວຽກງານທີ່ດິນກະສິກຳ;

6. ຄົ້ນຄວ້າ, ປະກອບຄຳເຫັນ ທາງດ້ານວິຊາການ ກ່ຽວກັບການສະເໜີຂໍສຳຫຼວດພື້ນທີ່ ເຊົ່າ ຫຼື ສຳປະທານທີ່ດິນກະສິກຳ;

7. ຄົ້ນຄວ້າ, ອະນຸມັດ ເປົ້າໝາຍ ການນຳໃຊ້ທີ່ດິນກະສິກຳ ແລະ ຢັ້ງຢືນການຫັນປ່ຽນທີ່ດິນກະສິກຳໄປເປັນທີ່ດິນປະເພດອື່ນ;

8. ເກັບກຳ, ສັງລວມ ແລະ ສະໜອງຂໍ້ມູນ ຂ່າວສານ ທີ່ດິນກະສິກຳ ເຂົ້າສູ່ລະບົບຂໍ້ມູນ ຂ່າວສານທີ່ດິນກະສິກຳ ພ້ອມທັງຄຸ້ມຄອງ ແລະ ນຳໃຊ້ ຂໍ້ມູນ ຂ່າວສານດັ່ງກ່າວ;

9. ຮັບ, ພິຈາລະນາ ແລະ ແກ້ໄຂຄຳສະເໜີຂອງບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ກ່ຽວກັບວຽກງານທີ່ດິນກະສິກຳ;

10. ສະເໜີ ສ້າງ, ຍົກລະດັບ ແລະ ນຳໃຊ້ບຸກຄະລາກອນ ກ່ຽວກັບວຽກງານທີ່ດິນກະສິກຳ;

11. ປະສານສົມທົບກັບ ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ພະແນກ, ອົງການທຽບເທົ່າພະແນກ ຂັ້ນແຂວງ, ອົງການປົກຄອງຂັ້ນເມືອງ ໃນການຈັດຕັ້ງປະຕິບັດວຽກງານທີ່ດິນກະສິກຳ;

12. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານທີ່ດິນກະສິກຳ ຕາມການມອບໝາຍ ຂອງຂັ້ນເທິງ;

13. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານທີ່ດິນກະສິກຳ ຕໍ່ກະຊວງກະສິກຳ ແລະ ປ່າໄມ້ ແລະ ອົງການປົກຄອງຂັ້ນແຂວງ ຢ່າງເປັນປົກກະຕິ;

14. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 71 ສິດ ແລະ ໜ້າທີ່ ຂອງຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ**

ຫ້ອງການກະສິກຳ ແລະ ປ່າໄມ້ ຂັ້ນເມືອງ ມີສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ຈັດຕັ້ງປະຕິບັດ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານທີ່ດິນກະສິກຳ ຢ່າງເຂັ້ມງວດ;

2. ໂຄສະນາ ເຜີຍແຜ່ ນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານທີ່ດິນກະສິກຳ;

3. ສຳຫຼວດ ແລະ ວາງແຜນນຳໃຊ້ທີ່ດິນກະສິກຳ ຂັ້ນບ້ານ;

4. ອອກປຶ້ມສະຖິຕິ ແລະ ໃບຢັ້ງຢືນ ການນຳໃຊ້ທີ່ດິນກະສິກຳ ໃຫ້ແກ່ບຸກຄົນ, ນິຕິບຸກ ແລະ ການຈັດຕັ້ງ;

5. ເກັບກຳ, ສັງລວມ ແລະ ສະໜອງຂໍ້ມູນ ຂ່າວສານ ທີ່ດິນກະສິກຳ ເຂົ້າສູ່ລະບົບຂໍ້ມູນ ຂ່າວສານ ທີ່ດິນກະສິກຳ ພ້ອມທັງຄຸ້ມຄອງ ແລະ ນຳໃຊ້ ຂໍ້ມູນ ຂ່າວສານດັ່ງກ່າວ;

6. ຕິດຕາມ, ກວດກາ ແລະ ປະເມີນຜົນ ການນຳໃຊ້ທີ່ດິນກະສິກຳ ຕາມແຜນການນຳໃຊ້ທີ່ດິນກະສິກຳ ຂັ້ນບ້ານ, ເປົ້າໝາຍການນຳໃຊ້, ການເຊົ່າ ຫຼື ສຳປະທານ ທີ່ດິນກະສິກຳ;

7. ຄົ້ນຄວ້າ, ປະກອບຄຳເຫັນ ທາງດ້ານວິຊາການ ຕໍ່ການສຳຫຼວດເນື້ອທີ່ ເຊົ່າ ຫຼື ສຳປະທານ ທີ່ດິນ ກະສິກຳ;

8. ຄົ້ນຄວ້າ, ອະນຸມັດ ການປ່ຽນເປົ້າໝາຍການນຳໃຊ້ທີ່ດິນກະສິກຳ;

9. ຮັບ, ພິຈາລະນາ ແລະ ແກ້ໄຂຄຳສະເໜີຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ກ່ຽວກັບ ວຽກງານທີ່ດິນກະສິກຳ;

10. ສະເໜີ ສ້າງ, ຍົກລະດັບ ແລະ ນຳໃຊ້ບຸກຄະລາກອນ ກ່ຽວກັບວຽກງານທີ່ດິນກະສິກຳ;

11. ປະສານສົມທົບກັບ ຫ້ອງການຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ຫ້ອງການ, ອົງການ ປົກຄອງຂັ້ນເມືອງ ແລະ ອົງການປົກຄອງບ້ານ ໃນການຈັດຕັ້ງປະຕິບັດວຽກງານທີ່ດິນກະສິກຳ;

12. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານທີ່ດິນກະສິກຳ ຕໍ່ພະແນກກະສິກຳ ແລະ ປ່າໄມ້ ຂັ້ນແຂວງ ແລະ ອົງການປົກຄອງຂັ້ນເມືອງ ຢ່າງເປັນປົກກະຕິ;

13. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 72 ສິດ ແລະ ໜ້າທີ່ ຂອງກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ**

ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນ ທີ່ກ່ຽວຂ້ອງ ມີສິດ ແລະ ໜ້າທີ່ ປະສານສົມທົບ ແລະ ຮ່ວມມືກັບ ອົງການຄຸ້ມຄອງ ແລະ ກວດກາ ວຽກງານທີ່ດິນກະສິກຳ ໃນການຄຸ້ມຄອງ ແລະ ກວດກາ ວຽກງານທີ່ດິນກະສິກຳ ຕາມພາລະບົດບາດ ແລະ ຄວາມຮັບຜິດຊອບຂອງຕົນ.

**ມາດຕາ 73 ເນື້ອໃນການກວດກາ**

ການກວດກາວຽກງານທີ່ດິນກະສິກຳ ມີເນື້ອໃນ ດັ່ງນີ້:

1. ການປະຕິບັດນິຕິກຳ ກ່ຽວກັບທີ່ດິນກະສິກຳ;
2. ການປະຕິບັດໜ້າທີ່ຂອງ ພະນັກງານ-ລັດຖະກອນ ແລະ ເຈົ້າໜ້າທີ່ກວດກາທີ່ດິນກະສິກຳ;
3. ການນຳໃຊ້ທີ່ດິນກະສິກຳ ຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ;
4. ເນື້ອໃນອື່ນ ທີ່ເຫັນວ່າມີຄວາມຈຳເປັນ.

**ມາດຕາ 74 ຮູບການການກວດກາ**

ການກວດກາ ມີ ສາມ ຮູບການ ດັ່ງນີ້:

1. ການກວດກາຕາມປົກກະຕິ ຊຶ່ງແມ່ນ ການກວດກາທີ່ດຳເນີນໄປຕາມແຜນການ ຢ່າງເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ;

2. ການກວດກາໂດຍມີການແຈ້ງໃຫ້ຊາບລ່ວງໜ້າ ຊຶ່ງແມ່ນ ການກວດການອກແຜນ ເມື່ອເຫັນວ່າມີຄວາມຈຳເປັນ ໂດຍມີການແຈ້ງໃຫ້ເປົ້າໝາຍທີ່ຖືກກວດກາຊາບລ່ວງໜ້າ;

3. ການກວດກາແບບກະທັນຫັນ ຊຶ່ງແມ່ນ ການກວດກາຢ່າງຮີບດ່ວນ ໂດຍບໍ່ໄດ້ແຈ້ງໃຫ້ເປົ້າໝາຍທີ່ຖືກກວດກາຊາບລ່ວງໜ້າ.

ໃນການດຳເນີນການກວດກາວຽກງານທີ່ດິນກະສິກຳ ໃຫ້ປະຕິບັດຕາມກົດໝາຍ ຢ່າງເຂັ້ມງວດ.

## ໝວດທີ 14
## ເຈົ້າໜ້າທີ່ກວດກາທີ່ດິນກະສິກຳ

### ມາດຕາ 75 ເຈົ້າໜ້າທີ່ກວດກາທີ່ດິນກະສິກຳ

ເຈົ້າໜ້າທີ່ກວດກາທີ່ດິນກະສິກຳ ແມ່ນ ພະນັກງານທີ່ສັງກັດຢູ່ໃນຂະແໜງການຄຸ້ມຄອງ ແລະ ພັດທະນາທີ່ດິນກະສິກຳ ທີ່ຖືກແຕ່ງຕັ້ງໂດຍລັດຖະມົນຕີກະຊວງກະສິກຳ ແລະ ປ່າໄມ້, ເຈົ້າແຂວງ, ເຈົ້າຄອງນະຄອນຫຼວງ, ເຈົ້າເມືອງ, ຫົວໜ້າເທດສະບານ, ເຈົ້ານະຄອນ ຕາມຂອບເຂດຄວາມຮັບຜິດຊອບຂອງແຕ່ລະຂັ້ນ ໃຫ້ເຄື່ອນໄຫວ ແລະ ປະຕິບັດໜ້າທີ່ ຫຼື ວຽກງານ ສະເພາະກິດໃດໜຶ່ງ.

ສຳລັບການຈັດຕັ້ງ, ມາດຕະຖານ ແລະ ເງື່ອນໄຂ ຂອງເຈົ້າໜ້າທີ່ກວດກາທີ່ດິນກະສິກຳ ໄດ້ກຳນົດໄວ້ໃນລະບຽບການສະເພາະ.

### ມາດຕາ 76 ສິດ ແລະ ໜ້າທີ່ ຂອງເຈົ້າໜ້າທີ່ກວດກາທີ່ດິນກະສິກຳ

ເຈົ້າໜ້າທີ່ກວດກາທີ່ດິນກະສິກຳ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ໂຄສະນາ, ເຜີຍແຜ່ ແລະ ແນະນຳ ກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງກັບທີ່ດິນກະສິກຳ;
2. ກວດກາ, ຕິດຕາມ ແລະ ຢັ້ງຢືນ ຄວາມຖືກຕ້ອງ ຂອງເອກະສານ ໃນການນຳໃຊ້, ພັດທະນາທີ່ດິນກະສິກຳ, ເຮັດທຸລະກິດ ກ່ຽວກັບກະສິກຳ ແລະ ການຫັນປ່ຽນທີ່ດິນກະສິກຳໄປເປັນດິນປະເພດອື່ນ, ປ່ຽນເປົ້າໝາຍການນຳໃຊ້ ທີ່ບໍ່ໄດ້ຮັບອະນຸຍາດ;
3. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ແລະ ອົງການປົກຄອງທ້ອງຖິ່ນ ຕິດຕາມ, ກວດກາການເຊົ່າ ແລະ ສຳປະທານ ທີ່ດິນກະສິກຳ ຢ່າງເປັນປົກກະຕິ;
4. ກ່າວເຕືອນ, ສະເໜີ ການຈັດຕັ້ງທີ່ກ່ຽວຂ້ອງ ໂຈະ, ຍົກເລີກ ຫຼື ຢຸດເຊົາ ກິດຈະການ ກ່ຽວກັບທີ່ດິນກະສິກຳ;
5. ຮັກສາຄວາມລັບ ຂອງລັດ ແລະ ທາງລັດຖະການ ກ່ຽວກັບວຽກງານກວດກາທີ່ດິນກະສິກຳ;
6. ຮັບ, ພິຈາລະນາ ແລະ ແກ້ໄຂຄຳສະເໜີຂອງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ກ່ຽວກັບວຽກງານທີ່ດິນກະສິກຳ;
7. ພົວພັນ, ປະສານສົມທົບກັບ ການຈັດຕັ້ງອື່ນ ລວມທັງອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງກັບການປະຕິບັດໜ້າທີ່ວຽກງານຂອງຕົນ;
8. ສະຫຼຸບ ແລະ ລາຍງານການຈັດຕັ້ງປະຕິບັດວຽກງານກວດກາທີ່ດິນກະສິກຳ ໃຫ້ແກ່ຂະແໜງການກະສິກຳ ແລະ ປ່າໄມ້ ທີ່ຕົນຂຶ້ນກັບ ຢ່າງເປັນປົກກະຕິ;
9. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ຕາມການມອບໝາຍ.

## ໝວດທີ 15
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 77 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນ ໃນການປະຕິບັດດຳລັດສະບັບນີ້ ເປັນຕົ້ນ ການຄຸ້ມຄອງ, ປົກປັກຮັກສາ, ພັດທະນາ ແລະ ນຳໃຊ້ທີ່ດິນກະສິກຳ ຖືກຕ້ອງຕາມເປົ້າໝາຍ ແລະ ມີປະສິດທິຜົນ ຈະໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 78 ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ລະເມີດດຳລັດ ສະບັບນີ້ ຈະຖືກ ສຶກສາອົບຮົມ, ກ່າວເຕືອນ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ທີ່ຕົນໄດ້ກໍ່ຂຶ້ນ ຫຼື ຖືກລົງໂທດທາງອາຍາ ຕາມກົດໝາຍ.

## ໝວດທີ 16
## ບົດບັນຍັດສຸດທ້າຍ

**ມາດຕາ 79 ເຄື່ອງແບບ, ເຄື່ອງໝາຍ, ກາໝາຍ, ຕາປະທັບ ແລະ ບັດ**

ເຈົ້າໜ້າທີ່ກວດກາທີ່ດິນກະສິກຳ ມີເຄື່ອງແບບ, ເຄື່ອງໝາຍ, ກາໝາຍ, ຕາປະທັບ ແລະ ບັດ ສະເພາະ ເພື່ອນຳໃຊ້ ເຂົ້າໃນການເຄື່ອນໄຫວວຽກງານຂອງຕົນ ໂດຍກະຊວງກະສິກຳ ແລະ ປ່າໄມ້ ເປັນຜູ້ກຳນົດ.

**ມາດຕາ 80 ການຈັດຕັ້ງປະຕິບັດ**

ກະຊວງກະສິກຳ ແລະ ປ່າໄມ້ ເປັນເຈົ້າການຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ມີປະສິດທິຜົນ ແລະ ໄດ້ຮັບຜົນດີ.

ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 81 ຜົນສັກສິດ**

ດຳລັດ ສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 15 ເມສາ 2025 ເປັນຕົ້ນໄປ.

**ຕາງໜ້າ ລັດຖະບານ ແຫ່ງ ສປປ ລາວ**
**ນາຍົກລັດຖະມົນຕີ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ນາຍົກລັດຖະມົນຕີ

**ສອນໄຊ ສີພັນດອນ**